ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-22 ມິຖຸນາ 2023
ປີທີ 12
ສະບັບທີ 927
ລາຍສັບປະດາ


## ກອງປະຊຸມກາງສະໄໝ ຄະນະບໍລິຫານງານພັກສະພາແຫ່ງຊາດ ສະໄໝທີ IV





(ສພຊ) ວັນທີ 13 ມິຖຸນາ2023ທີ່ສະພາແຫ່ງຊາດ, ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ສະໄໝທີ IV ເພື່ອທາບທາມຄວາມໄວ້ວາງໃຈຕໍ່ການນຳພາລວມ ແລະ ບຸກຄົນຄະນະບໍລິຫານງານພັກສະພາແຫ່ງຊາດ ກາງສະໄໝ ທີ IV ໂດຍການເປັນປະທານຂອງສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ປະທານສະພາແຫ່ງຊາດ; ມີບັນດາສະຫາຍຄະນະປະຈຳພັກ, ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ຜູ້ຕາງໜ້າຄະນະຈັດຕັ້ງສູນກາງພັກ, ຄະນະກວດກາສູນກາງພັກ, ຫ້ອງວ່າການສູນກາງພັກ, ບັນດາສະຫາຍຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ, ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານຄະນະເລຂາທິການ ແລະ ບັນດາສະຫາຍສະມາຊິກພັກທີ່ອີງຄະນະພັກສະພາແຫ່ງຊາດ ທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າກົມ ແລະ ທຽບເທົ່າເຂົ້າຮ່ວມທັງໝົດ 97 ສະຫາຍ.

ໃນພິທີ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ມື້ນີ້, ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມເພື່ອທາບທາມຄວາມໄວ້ວາງໃຈຕໍ່ການນຳພາລວມ ແລະ ບຸກຄົນ ຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ກາງສະໄໝທີ IV ຂອງຕົນຂຶ້ນຢ່າງເປັນທາງການ ເຊິ່ງກອງປະຊຸມຄັ້ງນີ້ ແມ່ນເພື່ອສຳຫຼວດກວດກາຄືນການນຳພາ-ຊີ້ນຳ ຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ກາງສະໄໝ ເຊິ່ງຈະໄດ້ຍົກໃຫ້ເຫັນການຊີ້ນຳ-ນຳພາຂອງອົງຄະນະພັກສະພາແຫ່ງຊາດສະໄໝທີ IV ໃນໄລຍະ 1 ປີກວ່າທີ່ຜ່ານມາ ກໍຄືການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ຈະໄດ້ຍົກໃຫ້ເຫັນດ້ານດີ ແລະ ຜົນສຳເລັດ ໃນຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ການເມືອງ, ຄວາມຮັບຜິດຊອບໃນການຜັນຂະຫຍາຍ

ອ່ານຕໍ່ໜ້າ 2



## ແຈ້ງການ

### ຂອງຄະນະເລຂາທິການສະພາແຫ່ງຊາດ

ອີງຕາມ ກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2020 ມາດຕາ 60 ກ່ຽວກັບກອງປະຊຸມສະໄໝສາມັນປະຈຳທົກເດືອນຕົ້ນປີ ຂອງສະພາແຫ່ງຊາດ ແລະ ອີງຕາມ ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 153/ຄປຈ, ລົງວັນທີ 7 ມິຖຸນາ 2023.

ຄະນະເລຂາທິການສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງອົງການຈັດຕັ້ງພັກ, ລັດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຊາບວ່າ: ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຈະຈັດຂຶ້ນຢ່າງເປັນທາງການ ລະຫວ່າງວັນທີ 26 ມິຖຸນາ-18 ກໍລະກົດ 2023 ຢູ່ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຄະນະເລຂາທິການສະພາແຫ່ງຊາດ ຈຶ່ງແຈ້ງມາເພື່ອຊາບດ້ວຍ.

ຜູ້ແທນປະຊາຊົນ PHOUTHEN PASAXON

## ສພຊ ເປັນເຈົ້າພາບຈັດກອງປະຊຸມ ການທັນເປັນດີຈີຕອນ ຂອງສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ




(ສພຊ) ໃນລະຫວ່າງວັນທີ 8-9 ມິຖຸນາ 2023, ສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ສຳເລັດການເປັນເຈົ້າພາບຈັດກອງປະຊຸມສຳມະນາຮ່ວມກັບສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ (APF) ພາຍໃຕ້ຫົວຂໍ້: "ການຄຸ້ມຄອງແບບ

ອ່ານຕໍ່ໜ້າ 2

## ປິດຊຸດຝຶກອົບຮົມທິດສະດີການເມືອງ ຂັ້ນຕົ້ນ ຊຸດທີ I ຂອງສະພາແຫ່ງຊາດ



(ສພຊ) ວັນທີ 9 ມິຖຸນາ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ມີພິທີປິດຊຸດເຝິກອົບຮົມທິດສະດີການເມືອງ ຂັ້ນຕົ້ນ ຊຸດທີ I ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີສະຫາຍ ນາງ ບຸນມີ ຈູມລະຈັກ ຮອງເລຂາຄະນະບໍລິຫານງານພັກ, ຮອງຫົວໜ້າສະຖາບັນການເມືອງ-ການປົກຄອງແຫ່ງຊາດ, ມີບັນດາສະຫາຍ

ອ່ານຕໍ່ໜ້າ 2

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງລັດຖະມົນຕີກະຊວງຍຸຕິທຳ ແຫ່ງ ສ.ກູບາ



(ສພຊ) ວັນທີ 12 ມິຖຸນາ 202 ທີ່ສະພາແຫ່ງຊາດ, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກູບາ, ປະທານຄະນະມິດຕະພາບລັດຖະສະ

ອ່ານຕໍ່ໜ້າ 3

## ຖະແຫຼງຂ່າວການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX



(ສພຊ) ປະຕິບັດຕາມ ມາດຕາ 60 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2020) ໃນການກະກຽມ ແລະ ຮຽກໂຮມກອງປະຊຸມສະໄໝສາມັນສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ປະຕິບັດຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 153/ຄປຈ ລົງວັນທີ 7/6/2023 ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX. ເພື່ອປະ

ອ່ານຕໍ່ໜ້າ 4

## ມອບ-ຮັບເຄື່ອງຕອງນ້ຳສະອາດ




(ສພຊ) ວັນທີ 14 ມິຖຸນາ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ມີພິທີມອບ-ຮັບເຄື່ອງຕອງນ້ຳສະອາດ ມາດຕະຖານນ້ຳດື່ມ ຈາກບໍລິສັດທີ່ປຶກສາດາຊານ ສ.ເກົາຫຼີ ກ່າວຮັບໂດຍທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

ອ່ານຕໍ່ໜ້າ 2

## ປະທານກຳມາທິການການຕ່າງປະເທດ ຕ້ອນຮັບເອກອັກຄະລັດຖະທູດສິງກະໂປ ເຂົ້າຢ້ຽມອຳລາ



(ສພຊ) ວັນທີ 7 ມິຖຸນາ 2023, ທີ່ສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ຕ້ອນຮັບການເຂົ້າຢ້ຽມອຳລາຂອງທ່ານ ນາງ ລິວ ຊູນ ລົນ Leow Siu Lon ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ

ອ່ານຕໍ່ໜ້າ 4

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ບັນດາມະຕິ, ຄຳສັ່ງ ແລະ ເອກະສານສຳຄັນຕ່າງໆຂອງພັກ, ການນຳພາດ້ານການເມືອງ-ແນວຄິດ, ການກໍ່ສ້າງພັກ-ພະນັກງານ, ປັບປຸງກົງຈັກການຈັດຕັ້ງ, ແບບແຜນການນຳພາ ແລະ ວິທີເຮັດວຽກ, ນຳພາອົງການຈັດຕັ້ງມະຫາຊົນ, ວຽກງານການເຄື່ອນໄຫວຕ່າງປະເທດ, ວຽກງານກວດກາ ແລະ ປ້ອງກັນພາຍໃນ ແລະ ອື່ນໆ; ນອກຈາກນີ້,




ຜູ້ແທນກອງປະຊຸມຍັງໄດ້ທາບທາມຄວາມໄວ້ວາງໃຈຕໍ່ການນຳພາຂອງບຸກຄົນ ໃນຄະນະບໍລິຫານງານພັກສະພາແຫ່ງຊາດ ດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນດຳລົງຊີວິດ, ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງທີ່ຖືກມອບໝາຍ ແລະ ແບບແຜນນຳພາແລະວິທີເຮັດວຽກ. ເພື່ອເຮັດໃຫ້ກອງປະຊຸມທາບທາມຄວາມໄວ້ວາງໃຈຕໍ່ການນຳພາລວມ ແລະ ບຸກຄົນ ຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ກາງສະໄໝຄັ້ງນີ້ ດຳເນີນໄປດ້ວຍຜົນສຳເລັດເປັນຢ່າງດີ, ສາມາດບັນລຸຕາມຈຸດປະສົງຄາດໝາຍທີ່ວາງໄວ້; ພ້ອມນັ້ນ, ສະຫາຍຍັງໄດ້ຮຽກຮ້ອງໃຫ້ບັນດາສະຫາຍຜູ້ແທນກອງປະຊຸມ ຈົ່ງໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບຂອງຕົນ ສຸມໃສ່ຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຕັມສ່ວນ ເພື່ອເປັນການຍົກສູງບົດບາດການຊີ້ນຳ-ນຳພາຂອງ ອົງຄະນະພັກສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

## ສພຊ...

(ຕໍ່ຈາກໜ້າ 1)

ດີຈິຕອນ ແລະ ການນຳໃຊ້ອິນເຕີເນັດ: ລະຫວ່າງອະທິປະໄຕຂອງຊາດ ແລະ ໂລກາພິວັດ”. ກອງປະຊຸມໄດ້ຈັດຂຶ້ນພາຍໃຕ້ການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ປະທານຄະນະສະມາຊິກລັດຖະສະພາຂອງບັນດາປະເທດທີ່ໃຊ້ພາສາຝຣັ່ງ (APF) ຂອງ ສປປລາວ, ໂດຍມີສະມາຊິກສະພາແຫ່ງຊາດ ທີ່ໃຊ້ພາສາຝຣັ່ງ ຈາກ ສສ.ຫວຽດນາມ, ກຳປູເຈຍ, ລາວ, ເອີຣົບ ແລະ ກອງເລຂາ APF ເຂົ້າຮ່ວມລວມທັງໝົດຈຳນວນ 50 ທ່ານ.

ກອງປະຊຸມຄັ້ງນີ້, ໄດ້ຮັບກຽດເຂົ້າຮ່ວມ ແລະ ມີຄຳເຫັນກ່າວເປີດພິທີຢ່າງເປັນທາງການຈາກທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໂດຍທ່ານໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນຕໍ່ຄະນະຜູ້ແທນຕ່າງປະເທດ ແລະ ໄດ້ຍົກໃຫ້ເຫັນເຖິງຄວາມໝາຍຄວາມສຳຄັນຂອງເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ທີ່ໄດ້ຖືກນຳໃຊ້ເຂົ້າໃນທຸກຂົງເຂດວຽກງານ ທັງພາກລັດ ແລະ ເອກະຊົນໃນລະດັບສູນກາງຈົນຮອດທ້ອງຖິ່ນຢ່າງກວ້າງຂວາງ ເຊິ່ງນັບມື້ນັບມີບົດບາດ ແລະ ກາຍເປັນເຄື່ອງມືທີ່ສຳຄັນຕໍ່ກັບວຽກງານບໍລິຫານລັດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ແລະ ອື່ນໆ ລວມທັງການເຜີຍແຜ່ຂ່າວສານຕໍ່ສາທາລະນະຊົນ, ການພົວພັນລະຫວ່າງຄົນກັບຄົນໃນຊີວິດປະຈຳວັນ ແລະ ການພົວພັນຮ່ວມມືກັບສາກົນ ທັງໄດ້ຍົກໃຫ້ເຫັນເຖິງນະໂຍບາຍຂອງ ສປປລາວ ທີ່ໄດ້ຖືເອົາວຽກງານດັ່ງກ່າວ ເປັນຂົງເຂດບູລິມະສິດໃນການບໍລິຫານ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ການຄົ້ນຄວ້າ ແລະ ການພັດທະນາ. ພ້ອມດຽວກັນນັ້ນ, ສະພາແຫ່ງຊາດລາວ ກໍໄດ້ນຳໃຊ້ລະບົບດິຈິຕອນ ເຂົ້າໃນການເຜີຍແຜ່ແນວທາງນະໂຍບາຍ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຕ່າງໆ ແລະ ການປະຕິບັດໜ້າທີ່ຂອງຕົນ ໃຫ້ປະຊາຊົນໄດ້ຮັບຊາບທົ່ວສັງຄົມ, ພ້ອມທັງຮັບຟັງ ແລະ ເກັບກຳຄຳຄິດຄຳເຫັນຂອງປະຊາຊົນຕໍ່ບັນຫາຕ່າງໆໃນສັງຄົມ.

ໃນກອງປະຊຸມສຳມະນາ, ໄດ້ຮັບຟັງການນຳສະເໜີບົດກ່ຽວກັບການຄຸ້ມຄອງອິນເຕີເນັດ: ພັນທະສັນຍາ ແລະ ຄວາມອັນຕະລາຍ ຂອງພື້ນທີ່ວ່າງອັນບໍ່ມີຂອບເຂດ; ພາບລວມກ່ຽວກັບການຄຸ້ມຄອງດິຈິຕອນ ແລະ ການນຳໃຊ້ອິນເຕີເນັດ ຢູ່ ສປປລາວ; ການຈັດຕັ້ງປະຕິບັດອະທິປະໄຕແຫ່ງຊາດ ໃນຍຸກສະໄໝໂລກາພິວັດ; ຄວາມໝາຍ ແລະ ບົດບາດ ຂອງລັດຖະສະພາ ຕໍ່ວຽກງານການຄຸ້ມຄອງວຽກງານດິຈິຕອນ; ບັນດາເຄື່ອງມື, ລະບຽບການ ທີ່ນຳໃຊ້ໃນລະດັບສາກົນໃນການຄວບຄຸມວຽກງານດິຈິຕອນ ທີ່ສະເໜີໂດຍຄະນະຜູ້ແທນສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ ແລະ ຜູ້ແທນສະພາແຫ່ງຊາດລາວ. ຫຼັງຈາກນັ້ນ, ຄະນະຜູ້ແທນກອງປະຊຸມໄດ້ພ້ອມກັນແລກປ່ຽນສົນທະນາ ແລະ ປຶກສາຫາລືກັນກ່ຽວກັບຫົວຂໍ້ຕ່າງໆຢ່າງກົງໄປກົງມາ ແລະ ສ້າງສັນ ເຊິ່ງໄດ້ຍົກສູງຄວາມຮັບຮູ້, ຄວາມເຂົ້າໃຈ ແລະ ເຫັນໄດ້ຜົນປະໂຫຍດ ແລະ ສິ່ງທ້າທາຍ ລວມທັງວິທີການຄຸ້ມຄອງລະບົບດິຈິຕອນ ແລະ ການນຳໃຊ້ອິນເຕີເນັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.

ກອງປະຊຸມສຳມະນາໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ ແລະ ໄດ້ໃຫ້ບົດຮຽນທີ່ດີແກ່ຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ເພື່ອນຳໄປສືບຕໍ່ຜັນຂະຫຍາຍໃນການປະຕິບັດຕົວຈິງ ແລະ ນຳເອົາຜົນປະໂຫຍດສູງສຸດມາໃຫ້ປະຊາຊົນຂອງແຕ່ລະປະເທດ.

## ປິດຊຸດຝຶກອົບຮົມ...

(ຕໍ່ຈາກໜ້າ 1)

ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ, ຄະນະຮັບຜິດຊອບຊຸດຝຶກອົບຮົມ, ຄູອາຈານຈາກສະຖາບັນການເມືອງ-ການປົກຄອງແຫ່ງຊາດ ແລະ ນັກຝຶກອົບຮົມເຂົ້າຮ່ວມ.

ໃນພິທີ, ໄດ້ຮັບຟັງການຜ່ານບົດສະຫຼຸບຜົນສຳເລັດຂອງການຮຽນ ຈາກສະຫາຍ ສົງຄຳ ວົງພະຈັນ ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ຫົວໜ້າຄະນະຊ່ວຍວຽກຄະນະພັກສະພາແຫ່ງຊາດ ທັງເປັນຄະນະຮັບຜິດຊອບການຮຽນທິດສະດີການເມືອງຂັ້ນຕົ້ນ; ຈາກນັ້ນ, ໄດ້ມີພິທີມອບໃບຢັ້ງຢືນທິດສະດີການເມືອງຂັ້ນຕົ້ນໃຫ້ກັບນັກຝຶກອົບຮົມ ຈຳນວນ 45 ສະຫາຍ.

ໂອກາດດັ່ງກ່າວ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມຕໍ່ພິທີປິດຊຸດຝຶກອົບຮົມຄັ້ງນີ້ວ່າ: ຜ່ານການຮັບຟັງການສະຫຼຸບລາຍງານຂອງຄະນະຮັບຜິດຊອບຊຸດຝຶກອົບຮົມ ຕີລາຄາສູງຕໍ່ຄວາມບາກບັ່ນພະຍາຍາມຂອງບັນດານັກຝຶກອົບຮົມທີ່ໄດ້ຕັ້ງໜ້າຄົ້ນຄວ້າຮ່ຳຮຽນ ສົມກັບຄວາມຢາກຮຽນ ຢາກຮູ້ບັນຫາພື້ນຖານຂອງທິດສະດີລັດທິມາກ-ເລນິນ ທີ່ເປັນທິດສະດີພື້ນຖານຂອງການປະຕິວັດເຮົາ, ມີຄວາມສົນໃຈຢາກເຂົ້າໃຈແຈ້ງຕື່ມກ່ຽວກັບບັນຫາທິດສະດີ-ພຶດຕິກຳ ຕົວຈິງຂອງພັກ-ລັດເຮົາ ໃນຕະຫລອດໄລຍະແຫ່ງການດຳເນີນການຕໍ່ສູ້ເພື່ອເອກະລາດແຫ່ງຊາດ ແລະ ໃນໄລຍະປັບປຸງບູລະນະລະບອບປະຊາທິປະໄຕ ປະຊາຊົນ ໃນປະຈຸບັນ ຢ່າງເປັນລະບົບ. ການຝຶກອົບຮົມຄັ້ງນີ້, ເປັນການປະກອບອາວຸດທີ່ສຳຄັນໃຫ້ແກ່ພະນັກງານ-ລັດຖະກອນ ໃນອົງການນິຕິບັນຍັດ ເຊິ່ງຈະເປັນການຊ່ວຍໃຫ້ບັນດາພະນັກງານສາມາດຍົກສູງປະສິດທິພາບໃນການປະຕິບັດໜ້າທີ່ການເມືອງໃຫ້ສູງຂຶ້ນເລື້ອຍໆ ແລະ ການທີ່ຊຸດຝຶກອົບຮົມຊຸດນີ້ສາມາດບັນລຸຜົນສຳເລັດໄດ້ນັ້ນ ປັດໄຈສຳຄັນແມ່ນການປະກອບສ່ວນຢ່າງຕັ້ງໜ້າຂອງບັນດາຄູ-ອາຈານ ຈາກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ທີ່ໄດ້ມີຄວາມຮັບຜິດຊອບສູງໃນການສິດສອນ, ຖ່າຍທອດຄວາມຮູ້ທາງດ້ານທິດສະດີ ແລະ ມີການສົມທຽບໃສ່ພຶດຕິກຳຕົວຈິງຂອງປະເທດເຮົາຢ່າງປະດິດສ້າງ ອັນໄດ້ເຮັດໃຫ້ຜູ້ຝຶກອົບຮົມສາມາດຮັບເອົາຄວາມຮູ້ຢ່າງເປັນລະບົບ; ເຖິງວ່າບັນດາຜູ້ຝຶກອົບຮົມຈະມາຈາກຫຼາຍກົມ, ຫຼາຍກຳມາທິການ ທີ່ມີລະດັບຄວາມຮັບຮູ້ພື້ນຖານແຕກຕ່າງກັນ ແຕ່ກໍໄດ້ຕັ້ງໜ້າໃນການຄົ້ນຄວ້າຮ່ຳຮຽນ, ກຳແໜ້ນເອົາບັນດາຫຼັກມູນທິດສະດີ ແລະ ພຶດຕິກຳຕົວຈິງ ທີ່ຄູອາຈານຖ່າຍທອດໃຫ້ໄດ້ເປັນຢ່າງດີ.

(ສຸພາວັນ ທອມສະນິດ)

## ເລື່ອງເດັ່ນ ຂ່າວເດັດ

***# ຄັດໂດຍ: ທອມສະນິດ***

*❐ ມາຮອດວັນທີ 8 ມິຖຸນາ 2023 ທົ່ວປະເທດ ມີຜູ້ຕິດເຊື້ອພະຍາດໄຂ້ຍຸງລາຍສະສົມ 3.848 ຄົນ, ຕິດເຊື້ອໃໝ່ 126 ຄົນ, ແຂວງທີ່ຕິດເຊື້ອພະຍາດໄຂ້ຍຸງຫຼາຍກວ່າໝູ່ແມ່ນແຂວງອຸດົມໄຊ 779 ຄົນ, ແຂວງຄຳມ່ວນ 607 ຄົນ, ນະຄອນຫລວງວຽງຈັນ 356 ຄົນ ແລະ ແຂວງອື່ນໆຕາມລຳດັບ.*

***ໜສພ. ປະເທດລາວ 14/06/2023***

*❐ ອີງຕາມບົດລາຍງານຂອງສູນສະຖິຕິແຫ່ງຊາດ ກະຊວງແຜນການ ແລະ ການລົງທຶນ ປະຈຳເດືອນພຶດສະພາ 2023 ໃຫ້ຮູ້ວ່າ: ດັດຊະນີລາຄາສິນຄ້າໂດຍລວມຂອງເດືອນພຶດສະພາຢູ່ໃນລະດັບ 182,29 ເຊິ່ງເພີ່ມຂຶ້ນຈາກ 131,28 ໃນເດືອນພຶດສະພາປີຜ່ານມາ ເຮັດໃຫ້ອັດຕາເງິນເຟີ້ລວມ ຂອງ ສປປລາວ ໃນເດືອນພຶດສະພາ 2023 ຢູ່ໃນລະດັບ 38,9%; ສັງເກດເຫັນວ່າ ຈັງຫວະການເພີ່ມຂຶ້ນຂອງລາຄາສິນຄ້າແລະບໍລິການຢູ່ໃນທ່າອ່ຽງຕ່ຳລົງເລັກໜ້ອຍເມື່ອທຽບໃສ່ເດືອນເມສາຜ່ານມາ (ເດືອນເມສາ 2023 ຢູ່ໃນລະດັບ 39,9%) ເຊິ່ງໝວດສິນຄ້າທີ່ມີອັດຕາເງິນເຟີ້ສູງກວ່າໝູ່ແມ່ນໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າເພີ່ມຂຶ້ນ52,7%, ໝວດຮັກສາສຸຂະພາບແລະຢາເພີ່ມຂຶ້ນ 40,8%, ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 38,7%, ໝວດເຄື່ອງໃຊ້ໃນເຮືອນເພີ່ມຂຶ້ນ 35,6%, ໝວດເຄື່ອງນຸ່ງຫົ່ມ ແລະ ເກີບເພີ່ມຂຶ້ນ 28,3%, ໝວດເຫຼົ້າ ແລະ ຢາສູບ ເພີ່ມຂຶ້ນ26,4%, ໝວດທີ່ພັກອາໄສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ ເພີ່ມຂຶ້ນ 25,2%, ຄົມມະນາຄົມ ແລະ ຂົນສົ່ງ ເພີ່ມຂຶ້ນ 24,7%.*

***ໜສພ. ປະຊາຊົນ 12/06/2023***

## ມອບ-ຮັບ...

(ຕໍ່ຈາກໜ້າ 1)

ໂອກາດດັ່ງກ່າວ, ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ໄດ້ກ່າວສະແດງຄວາມຂອບໃຈທີ່ທາງບໍລິສັດທີ່ປຶກສາດາຊານ ສ.ເກົາຫຼີ ໄດ້ປະກອບສ່ວນໃຫ້ການສະໜັບສະໜູນເຄື່ອງກອງນ້ຳ ເພື່ອໄປແຈກຢາຍໃຫ້ບັນດາບ້ານ, ເມືອງ ແລະ ແຂວງຈຳນວນໜຶ່ງທີ່ຂາດເຂີນນ້ຳກິນ, ນ້ຳໃຊ້ ໂດຍສະເພາະຢູ່ເຂດຊົນນະບົດຫ່າງໄກ ບໍ່ມີນ້ຳປະປາ ແລະ ບໍ່ສາມາດເຂົ້າເຖິງແຫຼ່ງນ້ຳສະອາດ.

# ສ້າງຄວາມເຂັ້ມແຂງກ່ຽວກັບການຕິດຕາມກວດກາ ການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ



(ສພຊ) ເພື່ອຮັບຟັງການນຳສະເໜີບົດຮຽນທີ່ດີຂອງສາກົນກ່ຽວກັບລະບົບປົກປ້ອງສັງຄົມໃຫ້ແກ່ສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການວັດທະນະທຳ-ສັງຄົມ ເພື່ອນຳມາເປັນຂໍ້ມູນໃນການຄົ້ນຄວ້າປັບປຸງລະບົບປົກປ້ອງສັງຄົມ ຢູ່ໃນ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ; ການນຳສະເໜີຜົນການຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມຂອງສະພາແຫ່ງຊາດ ທັງເພື່ອຄົ້ນຄວ້າປຶກສາຫາລືທິດທາງ, ມາດຕະການແກ້ໄຂໃນຕໍ່ໜ້າໃຫ້ແກ່ລັດຖະບານນຳໄປຄົ້ນຄວ້າພິຈາລະນາກ່ຽວກັບການປັບປຸງລະບົບປົກປ້ອງສັງຄົມ ຢູ່ໃນ ສປປລາວ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ. ພ້ອມນີ້, ກໍເພື່ອເຮັດໃຫ້ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການວັດທະນະທຳ-ສັງຄົມ ແລະ ກົງຈັກເສນາທິການຊ່ວຍວຽກຈະໄດ້ຮຽນຮູ້ ແລະ ເພີ່ມຄວາມເຂົ້າໃຈກ່ຽວກັບການປົກປ້ອງສັງຄົມຂອງບັນດາປະເທດທີ່ມີບົດຮຽນ ແລະ ປະສົບການທີ່ດີ ເພື່ອໃຫ້ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການວັດທະນະທຳ-ສັງຄົມ ນຳມາເປັນບ່ອນອີງໃນການຄົ້ນຄວ້າພິຈາລະນາເພື່ອປັບປຸງລະບົບປົກປ້ອງສັງຄົມຢູ່ ສປປ ລາວ; ສາມາດຕີລາຄາການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມຂອງລັດຖະບານໃນໄລຍະຜ່ານມາຈາກການຕິດຕາມກວດກາວຽກງານດັ່ງກ່າວຂອງສະມາຊິກສະພາແຫ່ງຊາດ ຈາກ 18 ເຂດເລືອກຕັ້ງ ເພື່ອສັງລວມເປັນບົດລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX; ສາມາດສັງລວມບັນຫາເພື່ອຮ່າງເປັນມະຕິຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາບົດລາຍງານຂອງລັດຖະບານ ໃນການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມ.

ກອງປະຊຸມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການວັດທະນະທຳ-ສັງຄົມ ກ່ຽວກັບການຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 5-6 ມິຖຸນາ 2023 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ແລະ ທ່ານ ດຣ. ນາງ ເພຍ ຣີເບວໂລ ບຣີໂຕ ຜູ້ຕາງໜ້າອົງການອຸຍນີເຊັບ; ມີບັນດາທ່ານຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ສະມາຊິກສະພາແຫ່ງຊາດຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ຊ່ຽວຊານຈາກອົງການອຸຍນີເຊັບ, ຄະນະກົມ, ຄະນະພະແນກ ແລະ ວິຊາການພາຍໃນກຳມາທິການເຂົ້າຮ່ວມຢ່າງພ້ອມພຽງ. ພ້ອມນີ້, ຍັງມີວິທະຍາກອນຈາກ 3 ປະເທດຄື: ກຳປູເຈຍ, ຫວຽດນາມ ແລະ ໄທ ທີ່ເຂົ້າຮ່ວມດ້ວຍຮູບແບບອອນລາຍ, ແຂກຖືກເຊີນ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນທີ່ປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງ ແລະ ສົນທະນາແລກປ່ຽນຢ່າງກົງໄປກົງມາກັບບັນດາວິທະຍາກອນໃນຫົວຂໍ້ຕ່າງໆ ໂດຍສະເພາະແມ່ນສະພາບການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມ (ຄວາມຄືບໜ້າຕໍ່ກັບເປົ້າໝາຍ) ລົງເລິກວຽກງານສະຫວັດດີການສັງຄົມ ແລະ ລົງເລິກວຽກງານປະກັນສຸຂະພາບ; ການສະໜັບສະໜູນຂອງອົງການແຮງງານສາກົນຕໍ່ກັບເປົ້າໝາຍ ແລະ ການເຄື່ອນໄຫວຂອງຍຸດທະສາດການປະກັນສັງຄົມແຫ່ງຊາດ ແລະ ຄຳແນະນຳ/ຂົງເຂດທີ່ສຳຄັນທີ່ຈະພິຈາລະນາໃນກົດໝາຍປະກັນສັງຄົມ; ການວິເຄາະຜົນຕອບແທນຂອງການລົງທຶນ ແລະ ການວິເຄາະພື້ນທີ່ງົບປະມານສຳລັບວຽກງານປົກປ້ອງສັງຄົມທີ່ກ່ຽວພັນກັບເດັກ ໃນ ສປປລາວ; ບົດຮຽນກ່ຽວກັບການເພີ່ມງົບປະມານໃສ່ວຽກງານປົກປັກຮັກສາສັງຄົມຢູ່ກຳປູເຈຍ; ບົດຮຽນການຈັດຕັ້ງປະຕິບັດແຜນງານປະກັນສຸຂະພາບ ແລະ ປະກັນສັງຄົມຂອງຫວຽດນາມ; ບົດຮຽນກ່ຽວກັບການຈັດຕັ້ງປະຕິບັດວຽກງານການປົກປ້ອງສັງຄົມຂອງປະເທດໄທ; ບົດລາຍງານຜົນການຕິດຕາມກວດກາຍຸດທະສາດປົກປ້ອງສັງຄົມ ລົງເລິກວຽກປະກັນສຸຂະພາບ ແລະ ກອງທຶນການປະກັນສຸຂະພາບ, ລົງເລິກວຽກງານປະກັນສັງຄົມ ແລະ ກອງທຶນການປະກັນສັງຄົມ, ລົງເລິກວຽກງານສະຫວັດດີການສັງຄົມ; ບົດລາຍງານຜົນການຕິດຕາມກວດກາວຽກງານສັງຄົມສົງເຄາະແກ່ເປົ້າໝາຍຕ່າງໆ ລວມທັງບັນເທົາທຸກສຸກເສີນໄພພິບັດຕ່າງໆ, ການສະໜອງທຶນບໍລິຫານໃຫ້ໂຮງຮຽນ ແລະ ນັກຮຽນຜູ້ທຸກຍາກ; ພ້ອມນັ້ນ, ຍັງໄດ້ຄົ້ນຄວ້າກ່ຽວກັບຄຳຊັກຖາມຕໍ່ກະຊວງ, ອົງການທີ່ກ່ຽວຂ້ອງກັບລະບົບປົກປ້ອງສັງຄົມ ທີ່ກຳນົດໄວ້ໃນຍຸດທະສາດປົກປ້ອງສັງຄົມ ທັງໄດ້ສັງລວມບັນຫາທີ່ຈະນຳເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX.

ໂອກາດດັ່ງກ່າວ, ກອງເລຂາຄວບຄຸມຢາສູບອາຊຽນຍັງໄດ້ເຜີຍແຜ່ສະພາບ ແລະ ນິຕິກຳກ່ຽວກັບການຄວບຄຸມຢາສູບ (ຢາສູບໄຟຟ້າ) ເພື່ອໃຫ້ບັນດາທ່ານທີ່ເຂົ້າຮ່ວມໄດ້ຮັບຮູ້ກ່ຽວກັບຜົນຮ້າຍ, ສະພາບການແຜ່ລະບາດຢູ່ ສປປລາວ ແລະ ບົດຮຽນໃນການສະກັດກັ້ນຢາສູບໄຟຟ້າຂອງຕ່າງປະເທດອີກດ້ວຍ.

**(ນາງ ປາກາລັກ ພົມມີໄຊ)**



# ມອບ-ຮັບເງິນປະກອບສ່ວນຊຸກຍູ້ ໃຫ້ແກ່ກອງທຶນຊ່ວຍເຫຼືອສັງຄົມ ສະພາແຫ່ງຊາດ




(ສພຊ) ວັນທີ 15 ມິຖຸນາ 2023 ທີ່ຫໍສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ມີພິທີມອບ-ຮັບເງິນ ໃຫ້ແກ່ກອງທຶນຊ່ວຍເຫຼືອສັງຄົມ ສະພາແຫ່ງຊາດ ເພື່ອປະກອບສ່ວນຊ່ວຍເຫຼືອສັງຄົມ ຈາກທ່ານ ອາຊີ ກອນສິນ ປະທານກຸ່ມບໍລິສັດລາວ ກອນສິນ ສາກົນ ຈຳກັດຜູ້ດຽວ ເປັນຈຳນວນເງິນ 20.000.000 ກີບ (ຊາວລ້ານກີບ) ກ່າວຮັບໂດຍທ່ານ ນາງ ມະນີວັນ ເຍຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ທັງເປັນຮອງປະທານກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ ພ້ອມຄະນະກອງທຶນ.

ໂອກາດດັ່ງກ່າວ, ທ່ານ ນາງ ມະນີວັນ ເຍຍປາວເຮີ ໄດ້ກ່າວສະແດງຄວາມຂອບໃຈທີ່ທາງກຸ່ມບໍລິສັດລາວ ກອນສິນ ສາກົນ ຈຳກັດຜູ້ດຽວ ທີ່ໄດ້ປະກອບສ່ວນໃຫ້ການສະໜັບສະໜູນ ເຊິ່ງເງິນຈຳນວນດັ່ງກ່າວແມ່ນຈະນຳໄປຊື້ອຸປະກອນການຮຽນ, ກິລາ ແລະ ອຸປະກອນການແພດ ໃນໂອກາດທີ່ການນຳຂອງສະພາແຫ່ງຊາດລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ.

**(ນາງ ໄຊໂສພາພອນ ມີ່ງມຸງຄຸນ)**

## ຮອງປະທານ...

(ຕໍ່ຈາກໜ້າ 1)

ພາ ລາວ-ກູບາ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ອິດກຣາ ມານູແອນ ຊິນເວຣາ ມຣາຕິເນັດ (Oscar Manuel Silvera Martinez) ກຳມະການສູນກາງພັກກອມມູນິດກູບາ, ລັດຖະມົນຕີກະຊວງຍຸຕິທຳ ແຫ່ງ ສ. ກູບາ ພ້ອມດ້ວຍຄະນະ.

ໃນໂອກາດດັ່ງກ່າວ, ສະຫາຍຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນຕໍ່ສະຫາຍອິດກຣາ ມານູແອນ ຊິນເວຣາ ມຣາຕິເນັດ ແລະ ຄະນະ ເຊິ່ງເປັນການປະກອບສ່ວນເພີ່ມທະວີ ແລະ ຮັດແໜ້ນສາຍພົວພັນມິດຕະພາບອັນເປັນມູນເຊື້ອດີງາມ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ກູບາ ໃຫ້ນັບມື້ຂະຫຍາຍຕົວຍິ່ງໆຂຶ້ນ; ພ້ອມນັ້ນ, ສະຫາຍ ໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມື ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດອຳນາດປະຊາຊົນກູບາ ໃນໄລຍະຜ່ານມາ ໄດ້ມີການແລກປ່ຽນການຢ້ຽມຢາມ, ພົບປະວິດີໂອທາງໄກ ຂອງຄະນະຜູ້ແທນລະດັບປະທານສະພາ ແລະ ຄະນະມິດຕະພາບລັດຖະສະພາ ນຳກັນຢ່າງເປັນປົກກະຕິ; ນອກນັ້ນ, ສອງອົງການນິຕິບັນຍັດ ຍັງໄດ້ມີການແລກປ່ຽນບົດຮຽນ ແລະ ຂໍ້ມູນ-ຂ່າວສານ, ສົ່ງສານຊົມເຊີຍ, ສານອວຍພອນ ເຊິ່ງກັນ ແລະ ກັນ ໃນໂອກາດວັນສຳຄັນຂອງຊາດ ແລະ ສະໜັບສະໜູນກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ພ້ອມທັງໄດ້ແຈ້ງສະພາບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດລາວ ຊຸດທີ IX ແລະ ປຶກສາຫາລືທິດທາງແຜນການການພົວພັນຮ່ວມມື ລະຫວ່າງສອງອົງການນິຕິບັນຍັດໃນຕໍ່ໜ້າ ໂດຍສະເພາະແມ່ນການແລກປ່ຽນຄະນະຜູ້ແທນໄປມາຫາສູ່ກັນ, ການສະໜັບສະໜູນ ແລະ ຮ່ວມມືກັນ ໃນການເຄື່ອນໄຫວໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ກໍຄືການກະກຽມເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາ ລະຫວ່າງຊາດອາຊຽນ ຄັ້ງທີ 45 (AIPA-45) ໃນປີ 2024 ຂອງສະພາແຫ່ງຊາດລາວ. ພ້ອມດຽວກັນນັ້ນ, ສະຫາຍຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ພັກ, ລັດ ແລະ ປະຊາຊົນ ກູບາ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ ຕໍ່ພັກ, ລັດ ແລະ ປະຊາຊົນລາວ ໃນພາລະກິດຕໍ່ສູ້ກູ້ຊາດ ໃນເມື່ອກ່ອນ ກໍຄືໃນໄລຍະປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃນປັດຈຸບັນ.

ຈາກນັ້ນ, ສະຫາຍ ອິດກຣາ ມານູແອນ ຊິນເວຣາ ມຣາຕິເນັດ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ສະຫາຍຮອງປະທານສະພາແຫ່ງຊາດລາວ ທີ່ໄດ້ເສຍສະຫຼະເວລາອັນມີຄຸນຄ່າ ໃຫ້ການຕ້ອນຮັບຢ່າງອົບອຸ່ນໃນຄັ້ງນີ້ ພ້ອມທັງແຈ້ງໃຫ້ຊາບວ່າ: ໃນໄລຍະ 4 ປີຜ່ານມາ ສະພາແຫ່ງຊາດ ແຫ່ງອຳນາດລັດກູບາ ໄດ້ຜ່ານກົດໝາຍຈຳນວນ 123 ສະບັບ, ກະຊວງຍຸຕິທຳ ກູບາ ກໍມີແຜນພັດທະນາປັບປຸງກົດໝາຍ 80 ສະບັບ ໃນໄລຍະ 2023-2027; ພ້ອມນັ້ນ, ສະຫາຍ ຢືນຢັນວ່າ ໃນຖານະທີ່ເປັນລັດຖະມົນຕີກະຊວງຍຸຕິທຳ ແຫ່ງ ສ. ກູບາ ຈະສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງປະເທດ ກູບາ-ລາວ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ ແໜ້ນແຟ້ນຍິ່ງຂຶ້ນ.

## ປະທານກຳມາທິການ...

(ຕໍ່ຈາກໜ້າ 1)

ແຫ່ງ ສາທາລະນະລັດ ສິງກະໂປ ປະຈຳ ສປປລາວ ໃນໂອກາດທີ່ສຳເລັດການປະຕິບັດໜ້າທີ່ການທູດ ຢູ່ ສປປລາວ.

ໃນໂອກາດດັ່ງກ່າວ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ກ່າວສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຊົມເຊີຍຜົນສຳເລັດໃນການປະຕິບັດໜ້າທີ່ການທູດຢູ່ ສປປລາວ ພ້ອມທັງຕີລາຄາສູງຕໍ່ການປະຕິບັດໜ້າທີ່ການທູດຂອງທ່ານ ນາງ ລິວ ຊູນ ລິນ ເອກອັກຄະລັດຖະທູດ ແຫ່ງ ສິງກະໂປ ປະຈຳ ສປປລາວ ທີ່ເຫັນວ່າຕະຫຼອດໄລຍະການປະຕິບັດໜ້າທີ່ຢູ່ລາວ ທ່ານໄດ້ເອົາໃຈໃສ່ຢ່າງຕັ້ງໜ້າປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງ ສອງປະເທດລາວ ແລະ ສິງກະໂປ ຕະຫຼອດໄລຍະຜ່ານມາໃຫ້ໄດ້ຮັບການພັດທະນາ ແລະຂະຫຍາຍຕົວເປັນກ້າວໆ ພ້ອມທັງຕາງໜ້າພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນສິງກະໂປ ທີ່ໄດ້ໃຫ້ການຊ່ວຍເຫຼືອ ສປປລາວ ໃນການພັດທະນາຊັບພະຍາກອນມະນຸດ ກໍຄືພື້ນຖານໂຄງລ່າງທາງດ້ານການສຶກສາ, ສາທາລະນະສຸກ ແລະ ອື່ນໆ, ພິເສດ ຢູ່ເຂດຫ່າງໄກ ຢູ່ແຂວງສະຫວັນນະເຂດ ເຊິ່ງເປັນແຂວງທີ່ກວ້າງ, ພົນລະເມືອງຫຼາຍ ທັງເປັນເຂດເລືອກຕັ້ງຂອງທ່ານຮອງປະທານສະພາແຫ່ງຊາດອີກດ້ວຍ; ພ້ອມນັ້ນ, ປະທານກຳມາທິການການຕ່າງປະເທດ ຍັງໄດ້ອວຍພອນໃຫ້ແກ່ທ່ານທູດ ຈົ່ງເດີນທາງກັບຄືນປະເທດດ້ວຍຄວາມສະຫວັດດີພາບ ພ້ອມທັງອວຍພອນໄຊອັນປະເສີດ ໃຫ້ທ່ານເອກອັກຄະລັດຖະທູດ ຈົ່ງປະສົບຜົນສຳເລັດໃນໜ້າທີ່ວຽກງານໃໝ່ທີ່ໃຫຍ່ຫຼວງກວ່າເກົ່າ.

ຈາກນັ້ນ, ທ່ານ ນາງ ລິວ ຊູນ ລິນ ໄດ້ສະແດງຄວາມຂອບໃຈຕໍ່ທ່ານປະທານກຳມາທິການການຕ່າງປະເທດ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຂອບໃຈຕໍ່ລັດຖະບານລາວ ກໍຄືສະພາແຫ່ງຊາດ ທີ່ໄດ້ເອົາໃຈໃສ່ໃຫ້ການຮ່ວມມືຊ່ວຍເຫຼືອໃນການປະຕິບັດໜ້າທີ່ການທູດຂອງຕົນ ຢູ່ ສປປລາວ ຕະຫຼອດໄລຍະເວລາຜ່ານມາໜຶ່ງສະໄໝ ແລະ ຫວັງວ່າລັດຖະບານ ແລະ ສະພາແຫ່ງຊາດລາວ ຈະສືບຕໍ່ໃຫ້ການຮ່ວມມືແກ່ທ່ານເອກອັກຄະລັດຖະທູດຄົນໃໝ່ ທີ່ຈະມາຮັບໜ້າທີ່ຕໍ່ໄປ ເພື່ອພ້ອມກັນສືບຕໍ່ຊຸກຍູ້, ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງ ສອງປະເທດທີ່ມີມາແລ້ວນັ້ນ ໃຫ້ສືບຕໍ່ໄດ້ຮັບການຂະຫຍາຍ ແລະ ເປັນຮູບປະທຳຍິ່ງໆຂຶ້ນ.

## ຖະແຫຼງຂ່າວ...

(ຕໍ່ຈາກໜ້າ 1)

ຕິບັດຕາມເນື້ອໃນຈິດໃຈດັ່ງກ່າວບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ປະສານສົມທົບກັບອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ໃນການກະກຽມເນື້ອໃນຂອງແຕ່ລະພາກສ່ວນທີ່ຈະນຳສະເໜີຕໍ່ກອງປະຊຸມໃນຄັ້ງນີ້. ມາເຖິງປັດຈຸບັນ ເຫັນວ່າການກະກຽມແມ່ນຄົບຖ້ວນ, ສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍແລ້ວ; ສະນັ້ນ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ໃນວັນທີ 16 ມິຖຸນາ 2023 ວ່າ: ໃນນາມເລຂາທິການສະພາແຫ່ງຊາດ, ທີ່ຈະກອງເລຂາກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX, ຂໍຕາງໜ້າຄະນະປະຈຳສະພາແຫ່ງຊາດ ມີຄວາມຍິນດີ ແລະ ຖືເປັນກຽດ ແຈ້ງມາຍັງບັນດາທ່ານພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າ ໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຮັບຊາບກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:

- ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນຈັນ, ວັນທີ 26 ມິຖຸນາ 2023 ແລະ ຈະດຳເນີນໄປເຖິງວັນອັງຄານ, ວັນທີ 18 ກໍລະກົດ 2023 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ (ຫາດຫຼວງ), ນະຄອນຫລວງວຽງຈັນ ເຊິ່ງຈະໃຊ້ເວລາດຳເນີນກອງປະຊຸມທັງໝົດ 17 ວັນ (ບໍ່ລວມເອົາວັນພັກທາງລັດຖະການ).

- ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1. ວຽກງານຂອງລັດຖະບານ:

1) ບົດລາຍງານໂດຍສັງເຂບຂອງທ່ານ ນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານພົ້ນເດັ່ນ ຂອງລັດຖະບານ;

2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2023 ແລະ ແຜນການ 6 ເດືອນທ້າຍປີ 2023;

3) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2023 ແລະ ແຜນການ 6 ເດືອນທ້າຍປີ 2023;

4) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2023 ແລະ ແຜນການ 6 ເດືອນທ້າຍປີ 2023;

5) ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

6) ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຢາເສບຕິດ;

7) ບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງແຜນການລົງທຶນ ແລະ ການຈັດສັນງົບປະມານໃຫ້ແກ່ໂຄງການລົງທຶນຂອງລັດ ປະຈຳປີ 2024;

8) ບົດລາຍງານຂອງລັດຖະບານ ກ່ຽວກັບການສະເໜີຂໍດັດແກ້ແຜນງົບປະມານແຫ່ງລັດ 6 ເດືອນທ້າຍປີ 2023 ແລະ ແຜນລົງທຶນຂອງລັດ ປະຈຳປີ 2023 ທີ່ຕິດພັນກັບມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງຜົນການກວດກາ ຂອງອົງການກວດກາແຫ່ງລັດ ແລະ ຜົນການກວດສອບແຫ່ງລັດ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບຮອງການອອກພັນທະບັດອ່ອຍໜີ້ 3 ແຈ ຮ່ວງ 8 ພັນຕື້ກີບ;

9) ບົດລາຍງານຂອງລັດຖະບານ ກ່ຽວກັບຮ່າງຍຸດທະສາດການພັດທະນາແຜ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035;

10) ບົດລາຍງານຂອງລັດຖະບານ ກ່ຽວກັບຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030;

11) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ.

2. ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 10 ສະບັບ ໃນນີ້:

2.1 ຮ່າງກົດໝາຍສ້າງໃໝ່ 4 ສະບັບ ຄື:

(1) ຮ່າງກົດໝາຍວ່າດ້ວຍ ວຽກງານສາທາລະນະສຸກ;

(2) ຮ່າງກົດໝາຍວ່າດ້ວຍ ການຈັດຫາງານ;

(3) ກົດໝາຍວ່າດ້ວຍອາກອນທີ່ດິນ;

(4) ຮ່າງກົດໝາຍວ່າດ້ວຍ ເຍົາວະຊົນລາວ.

**2.2 ກົດໝາຍປັບປຸງ 6 ສະບັບ ຄື:**

(1) ກົດໝາຍວ່າດ້ວຍທະນາຄານທຸລະກິດ;

(2) ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ;

(3) ກົດໝາຍວ່າດ້ວຍສັດປ່າ;

(4) ກົດໝາຍວ່າດ້ວຍການພິມຈຳໜ່າຍ;

(5) ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

(6) ກົດໝາຍວ່າດ້ວຍສານທະຫານ.

3. ວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ:

1) ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍຊົງເຂດຍຸຕິທຳ 2 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

2) ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍຊົງເຂດຍຸຕິທຳ 2 ສະບັບ ຄື: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

4. ວຽກງານສະພາແຫ່ງຊາດ: ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໃນໄລຍະ 2 ກອງປະຊຸມທີ່ຜ່ານມາ ແລະ ທິດທາງແຜນການ 6 ເດືອນແຕ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.

5. ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ມີຈຳນວນ 8 ບົດ:

1) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ການສະເໜີຂໍດັດແກ້ແຜນງົບປະມານແຫ່ງລັດ ປະຈຳປີ 2023, ທິດທາງແຜນການລົງທຶນ ແລະ ຈັດສັນງົບປະມານການລົງທຶນຂອງລັດ ປະຈຳປີ 2024;

2) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

3) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຢາເສບຕິດ;

4) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການສະເໜີຂໍດັດແກ້ແຜນງົບປະມານແຫ່ງລັດ 6 ເດືອນທ້າຍປີ 2023 ແລະ ແຜນລົງທຶນຂອງລັດ ປະຈຳປີ 2023 ທີ່ຕິດພັນກັບມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງຜົນການກວດກາຂອງອົງການກວດກາແຫ່ງລັດ ແລະ ຜົນການກວດສອບແຫ່ງລັດ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບຮອງການອອກພັນທະບັດອ່ອຍໜີ້ 3 ແຈ ຮ່ວງ 8 ພັນຕື້ກີບ;

5) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ;

6) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຮ່າງຍຸດທະສາດການພັດທະນາແຜ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035;

7) ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030;

8) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍຊົງເຂດຍຸຕິທຳ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

6. ມະຕິກອງປະຊຸມສະພາແຫ່ງຊາດ ລວມມີ 18 ສະບັບ:

ໃນນັ້ນ, ມີມະຕິຮັບຮອງເອົາວຽກງານຊົງເຂດຕ່າງໆ ຄື:

1) ມະຕິຮັບຮອງເອົາບົດລາຍງານຂອງລັດຖະບານ 6 ສະບັບ;

2) ມະຕິຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ 1 ສະບັບ;

3) ມະຕິຮັບຮອງເອົາບົດລາຍງານຂອງສະພາແຫ່ງຊາດ 1 ສະບັບ;

4) ມະຕິຮັບຮອງເອົາກົດໝາຍ ຈຳນວນ 10 ສະບັບ.

ອີກເທື່ອໜຶ່ງ, ໃນນາມຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ, ຂ້າພະເຈົ້າ ຂໍເຊີນຊວນບັນດາທ່ານພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນບັນດາເຜົ່າທຸກຊັ້ນຄົນໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງຕິດຕາມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້, ໃນໄລຍະກະກຽມ ແລະ ດຳເນີນກອງປະຊຸມ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານຮັບຜິດຊອບໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມ: ບັນດາທ່ານສາມາດສົ່ງຄຳຄິດຄຳເຫັນ ແລະ ຄຳສະເໜີໄປຍັງກອງປະຊຸມໄດ້ຕາມວິທີລຸ່ມນີ້:

- ສາຍດ່ວນ: 156 ຮັບໃຊ້ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX.

- ອີເມວ: nalao.156@gmail.com.

# ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ

(ສພຊ) ວັນທີ 5 ມິຖຸນາ 2023 ຢູ່ທີ່ເມືອງປາກກະດິງ ແຂວງບໍລິຄຳໄຊ, ທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງບໍລິຄຳໄຊ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຂົງເຂດຍຸຕິທຳ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດຂອງເມືອງປາກກະດິງ ແຂວງບໍລິຄຳໄຊ ໂດຍການເຂົ້າຮ່ວມຂອງ ທ່ານ ພູເຂົາເງິນ ອິນທະວົງ ເຈົ້າເມືອງເມືອງປາກກະດິງ, ມີບັນດາທ່ານສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າ



ຫ້ອງການທີ່ກ່ຽວຂ້ອງຂອງເມືອງເຂົ້າຮ່ວມ.

ການເຄື່ອນໄຫວເຮັດວຽກຄັ້ງນີ້, ແມ່ນໄດ້ຮັບຟັງການລາຍງານໂດຍຫຍໍ້ຈາກຄະນະຮັບຜິດຊອບຜັນຂະຫຍາຍວາລະແຫ່ງຊາດກ່ຽວກັບການຈັດຕັ້ງປະຕິບັດໃນການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດຂອງເມືອງ, ການຈັດຕັ້ງປະຕິບັດຂອງເຈົ້າໜ້າທີ່ ປກສ ເມືອງ ໃນການດຳເນີນການຈັດຕັ້ງປະຕິບັດດ້ານວິຊາສະເພາະ ໂດຍສະເພາະແມ່ນວຽກງານການແກ້ໄຂບັນຫາຢາເສບຕິດ ເຊັ່ນ ເກັບກຳບັນຊີເປົ້າໝາຍ, ສຶກສາອົບຮົມຜູ້ເສບຢາເສບຕິດ, ມ້າງທຳລາຍຄະດີຕາມສາຍຕັ້ງວິຊາສະເພາະ, ອັດປ່ອງຂ້າມລອຍໃນການຂົນສົ່ງຄ້າຂາຍຢາເສບຕິດ, ວຽກງານກອງທຶນກວດກາ ແລະ ຄວບຄຸມຢາເສບຕິດ, ວຽກງານປິ່ນປົວ ແລະ ຟື້ນຟູສຸຂະພາບໃຫ້ແກ່ຜູ້ຕິດຢາເສບຕິດ, ວຽກງານຮ່ວມມື ແລະ ແລກປ່ຽນຂໍ້ມູນຂ່າວສານ, ວຽກງານດຳເນີນຄະດີ-ປະຕິບັດຕາມກົດໝາຍຕໍ່ຜູ້ກະທຳຜິດ. ພ້ອມນັ້ນ, ກໍໄດ້ມີການສົນທະນາແລກປ່ຽນໃນຫຼາຍບັນຫາ ໂດຍຊອກໄດ້ບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ປາກົດການຫຍໍ້ທໍ້ຕ່າງໆ ທີ່ຈະຕ້ອງໄດ້ຮ່ວມກັນເອົາໃຈໃສ່ປັບປຸງແກ້ໄຂ.

ໂອກາດດັ່ງກ່າວ, ປະທານກອງປະຊຸມໄດ້ສະແດງຄວາມຊົມເຊີຍຕໍ່ບັນດາຂະແໜງການທີ່ກ່ຽວຂ້ອງ ທີ່ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນຂົງເຂດຍຸຕິທຳ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດຂອງເມືອງກໍຄືຂອງແຂວງ, ຮັກສາໄດ້



ຄວາມສະຫງົບໂດຍພື້ນຖານ. ພ້ອມກັນນັ້ນ, ທ່ານໄດ້ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ດຳເນີນການສືບສວນ-ສອບສວນຄະດີທີ່ຍັງຄ້າງຄາໃຫ້ສຳເລັດ ສືບຕໍ່ຂຶ້ນແຜນເພື່ອມ້າງລາຍຄະດີຕາມສາຍຕັ້ງວິຊາສະເພາະ ເພື່ອແກ້ໄຂບັນຫາການແຜ່ລະບາດຂອງຢາເສບຕິດ ປະເພດກາເຟ, ຢາສູບໄຟຟ້າ, ນ້ຳຕົ້ມໃບກະທ່ອມ ແລະ ອື່ນໆ ເພື່ອເຮັດໃຫ້ການແຜ່ລະບາດຂອງຢາເສບຕິດຫຼຸດໜ້ອຍຖອຍລົງ, ສັງຄົມມີຄວາມສະຫງົບແນໃສ່ເຮັດໃຫ້ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານໃຫ້ໜັກແໜ້ນເຂັ້ມແຂງ ແລະ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ໃນຕອນບ່າຍ, ຄະນະຍັງໄດ້ເຄື່ອນໄຫວຕິດຕາມກວດກາຢູ່ຄ້າຍຄຸມຂັງດັດສ້າງບ້ານໂພນຈະເລີນ ເມືອງປາກກະດິງ ແລະ ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຄ້າຍດັ່ງກ່າວ.

ການເຄື່ອນໄຫວໃນຄັ້ງນີ້, ໄດ້ຮັບການສະໜັບສະໜູນໂດຍມູນນິທິເອເຊຍ (the Asia Foundation).

**(ນາງ ໂສລະຢ້າ ໄຊຍະວົງ)**

# ສປນວ ຫາລືກັບ ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

(ສພຊ) ໃນວັນທີ 2 ມິຖຸນາ 2023 ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືການແກ້ໄຂບັນຫາຄຳສະເໜີຂອງປະຊາຊົນ ພາຍໃຕ້ການເປັນປະທານຮ່ວມລະຫວ່າງ ທ່ານ ນາງ ພິດສະໄໝ ຕົ້ນສະຫວັນ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສປນວ ແລະ ທ່ານ ນາງ ລັດທະນາ ດວງບຸບຜາ ຮອງຫົວໜ້າກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ຜູ້ອຳນວຍການກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ; ມີບັນດາທ່ານຫົວໜ້າຄະນະສະມາຊິກສະພາປະຊາຊົນປະຈຳເຂດເລືອກຕັ້ງເມືອງໄຊເສດຖາ, ເມືອງປາກງື່ມ, ຮອງເລຂາທິການ ສປນວ; ບັນດາທ່ານຮອງຜູ້ອຳນວຍການກອງທຶນ, ຫົວໜ້າພະແນກ, ຂະແໜງການທີ່ກ່ຽວຂ້ອງ, ຕົວແທນບັນດາທະນາຄານ, ສະຖາບັນການເງິນທີ່ຮັບເງິນຝາກປະຕູຄຳ, ນາຍບ້ານ ແລະ ຕາງໜ້າກຸ່ມຜະລິດບ້ານທ່າຊ້າງ ເມືອງປາກງື່ມ ແລະ



ປະຊາຊົນບ້ານໂນນຄໍ້ໃຕ້ ເມືອງໄຊເສດຖາ ໄດ້ໃຫ້ການເຂົ້າຮ່ວມ.

ກອງປະຊຸມດັ່ງກ່າວ, ໄດ້ປຶກສາຫາລື ແລະ ແລກປ່ຽນຄຳເຫັນກ່ຽວກັບຄຳສະເໜີຂອງປະຊາຊົນທີ່ສະເໜີຜ່ານບັນດາທ່ານສະມາຊິກສະພານະຄອນຫຼວງວຽງຈັນ ໃນບັ້ນລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ແລະ ສປນວ ໃນໄລຍະຜ່ານມາ ເຊິ່ງກອງປະຊຸມໄດ້ຮັບຟັງການລາຍງານຂອງນາຍບ້ານທ່າຊ້າງ ແລະ ບ້ານໂນນຄໍ້ ດ້ານສະພາບຄວາມຫຍຸ້ງຍາກໃນການເຂົ້າເຖິງແຫຼ່ງທຶນຂອງຫົວໜ່ວຍທຸລະກິດ ເປັນຕົ້ນແມ່ນການກຳນົດເງື່ອນໄຂຕ່າງໆ ໃນການເຂົ້າເຖິງແຫຼ່ງທຶນດອກເບ້ຍຕໍ່າເຫັນວ່າມີຄວາມຫຍຸ້ງຍາກສັບຊ້ອນ ເຮັດໃຫ້ຊາວກະສິກອນເຂົ້າເຖິງຍາກ.

ນອກຈາກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ເປັນຄູ່ຮ່ວມສັນຍາຂອງກອງທຶນກ່ຽວກັບບັນຫາດັ່ງກ່າວ.

ຕອນທ້າຍກອງປະຊຸມ, ຄະນະປະທານກອງປະຊຸມ ໄດ້ມີຄຳເຫັນແລກປ່ຽນຕໍ່ບັນດາທະນາຄານ, ສະຖາບັນກ່ຽວຂ້ອງ ໃຫ້ນຳເອົາບັນຫາດັ່ງກ່າວໄປພິຈາລະນາຄົ້ນຄວ້າຕື່ມເພື່ອສ້າງເງື່ອນໄຂທີ່ເໝາະສົມ ແລະ ສາມາດສະໜອງໃຫ້ຊາວກະສິກອນໄດ້. ພ້ອມກັນນັ້ນ, ກໍໄດ້ແນະນຳໃຫ້ບັນດາທະນາຄານ, ສະຖາບັນທີ່ກ່ຽວຂ້ອງ ໃຫ້ມີການເຜີຍແຜ່ ແລະ ແນະນຳອະທິບາຍກ່ຽວກັບເງື່ອນໄຂ, ຂັ້ນຕອນ ໃນການເຂົ້າເຖິງແຫຼ່ງທຶນທີ່ຖືກຕ້ອງໃຫ້ປະຊາຊົນຢູ່ຂັ້ນເມືອງ ແລະ ບັນດາກຸ່ມບ້ານເພື່ອສ້າງຄວາມເຂົ້າໃຈເພີ່ມຕື່ມ.



# ຄະນະ ສສຊ ເຂດ 8 ຈັດກອງປະຊຸມຮ່ວມກັບອົງການປົກຄອງແຂວງ

(ສພຊ) ວັນທີ 8 ມິຖຸນາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມຮ່ວມລະຫວ່າງຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ກັບອົງການປົກຄອງແຂວງຫົວພັນ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ, ຮອງປະທານ ສພຂ ຫົວພັນ ແລະ ທ່ານ ພອນສຸກ ອິນທະວົງ ຮອງເຈົ້າແຂວງແຂວງຫົວພັນ, ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ; ມີບັນດາທ່ານຄະນະປະຈຳ, ຄະນະເລຂາທິການ ສພຂ, ສສຊ ປະຈຳເຂດເລືອກຕັ້ງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ, ກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ຕະຫລອດຮອດພະນັກງານວິຊາການຂະແໜງການກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນວາລະກອງປະຊຸມ, ໄດ້ຮັບຟັງຮ່າງບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງ 6 ເດືອນທ້າຍປີ 2023 ຂອງ



ແຂວງຫົວພັນ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງ 6 ເດືອນທ້າຍປີ 2023 ແລະ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດ ຈາກຂະແໜງການກ່ຽວຂ້ອງ. ຈາກນັ້ນ, ຜູ້ແທນກອງປະຊຸມ ກໍໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ຕໍ່ກັບບັນດາບົດລາຍງານດັ່ງກ່າວ ໃຫ້ມີເນື້ອໃນລະອຽດຄົບຖ້ວນ, ສົມບູນ ແລະ ເພື່ອເປັນການສັງລວມຂໍ້ມູນສຳຄັນໃຫ້ ສສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ໃນການປະກອບຄຳເຫັນຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະເປີດຂຶ້ນໃນເດືອນມິຖຸນາ ຫາ ທ້າຍເດືອນກໍລະກົດນີ້.

ຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນຊີ້ນຳ ໂດຍທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ອົງການປົກຄອງແຂວງທີ່ມີຄວາມພະຍາຍາມເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຂອງຕົນ ຕາມມະຕິກອງປະຊຸມ ສພຂ ຫົວພັນ ໄດ້ພິຈາລະນາຮັບຮອງເອົາ ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ເຫັນວ່າມີຫຼາຍອັນພົ້ນເດັ່ນ ຄຽງຄູ່ກັນນີ້, ທ່ານຍັງໄດ້ເນັ້ນໜັກບາງບັນຫາ ເປັນຕົ້ນແມ່ນຮຽກຮ້ອງມາຍັງພາກສ່ວນກ່ຽວຂ້ອງຂອງອົງການປົກຄອງແຂວງ ຈົ່ງໄດ້ເອົາໃຈໃສ່ຮີບຮ້ອນປັບປຸງບົດລາຍງານຂອງຕົນ ຕາມການປະກອບຄຳຄິດຄຳເຫັນຂອງຜູ້ແທນເຂົ້າຮ່ວມກອງປະຊຸມ ໃຫ້ມີເນື້ອໃນຄົບຖ້ວນ, ຈະແຈ້ງ ພ້ອມທັງຍົກສູງປະສິດທິພາບ, ດ້ານກົນໄກການປະສານງານລະຫວ່າງ ສພຂ ກັບອົງການປົກຄອງແຂວງ ໃຫ້ມີຄວາມຄ່ອງຕົວ, ເປັນເອກະພາບ ແລະ ທັນຕາມກຳນົດເວລາ.

**(ນັກຂ່າວ ສພຂ ຫົວພັນ)**



# ສພຂ ເຊກອງ ຮ່ວມພິທີປູກຕົ້ນໄມ້ ແລະ ສະເຫຼີມສະຫຼອງວັນເດັກນ້ອຍສາກົນ



(ສພຊ) ໃນຕອນເຊົ້າ ວັນທີ 1 ມິຖຸນາ 2023 ທີ່ເດີ່ນສວນ 25 ປີຂອງແຂວງເຊກອງ ໄດ້ມີພິທີປູກຕົ້ນໄມ້ ເນື່ອງໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ ຄົບຮອບ 43 ປີ (1 ມິຖຸນາ 1980-1 ມິຖຸນາ 2023) ເຊິ່ງຈັດໂດຍເມືອງລະມາມ ແຂວງເຊກອງ ໂດຍມີທ່ານ ອາລຸນໄຊ ສູນນະລາດ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ທ່ານ ເຫຼັກໄຫຼ ສີວິໄລ ເຈົ້າແຂວງ ແຂວງເຊກອງ, ມີທ່ານຮອງເລຂາພັກແຂວງ, ຮອງເຈົ້າແຂວງ, ເຈົ້າເມືອງ-ຮອງເຈົ້າເມືອງ, ຫົວໜ້າ-ຮອງຫົວໜ້າພະແນກ, ຫ້ອງການ, ອົງການທຽບເທົ່າ, ພະນັກງານ-ລັດຖະກອນ, ນ້ອງນ້ອຍນັກຮຽນ ແລະ ອົງການປົກຄອງບ້ານເທສະບານແຂວງເຊກອງ ເຂົ້າຮ່ວມຢ່າງພ້ອມພຽງ.

ສຳລັບສະພາປະຊາຊົນແຂວງ (ສພຂ) ເຊກອງ ນຳໂດຍທ່ານ ນາງ ຄຳເສັງ ທຸມມະວົງສາ ຮອງປະທານ ສພຂ; ມີບັນດາທ່ານຄະນະເລຂາທິການ ສພຂ, ຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການ ໄດ້ເຂົ້າຮ່ວມໃນພິທີດັ່ງກ່າວ ດ້ວຍບັນຍາກາດຟົດຟື້ນ.

ໂອກາດດັ່ງກ່າວ, ທ່ານ ສະໜອງ ສົມມາວັດ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງລະມາມ ໄດ້ກ່າວວ່າ: ໃນປີນີ້, ເມືອງລະມາມ ມີແຜນຈະປູກຕົ້ນໄມ້ໃຫ້ໄດ້ໃນເນື້ອທີ່ທັງໝົດ 405 ເຮັກຕາ ໃນນັ້ນ, ພາກລັດປູກ 210 ເຮັກຕາ, ຊຸກຍູ້ປະຊາຊົນ ແລະ ບໍລິສັດປູກໃຫ້ໄດ້ 195 ເຮັກຕາ ແລະ ສະເພາະໃນວັນທີ 1 ມິຖຸນານີ້, ໄດ້ກຳນົດການປູກໄມ້ປະດັບເຂດເທສະບານເມືອງຢູ່ 4 ຈຸດຄື: ສວນ 25 ປີຂອງແຂວງ, ເສັ້ນທາງ 16 B (ເຊກອງ-ດາກຈຶງ) ແຕ່ 3 ແຍກຫ້ອງການ ປກສ ເມືອງ ຫາ ຫໍວິຊິວມິດຕະພາບລາວ-ຍີ່ປຸ່ນແຂວງເຊກອງ, ເສັ້ນທາງທ່າບັກ ຫາທະນາຄານພົງສະຫວັນ ແລະ ເສັ້ນທາງແຕ່ຫໍວິຊິວມິດຕະພາບລາວ-ຍີ່ປຸ່ນແຂວງເຊກອງ ຫາທາງເຂົ້າທ່າບັກ.

ທັງນີ້, ກໍເພື່ອເປັນການຟື້ນຟູປ່າໄມ້, ອະນຸລັກຮັກສາຕົ້ນໄມ້ທີ່ມີຄຸນຄ່າ ເພື່ອໃຫ້ລູກຫຼານຜູ້ເກີດໃໝ່ໃຫຍ່ລຸນໄດ້ເຫັນ ແລະ ຢູ່ກັບທຳມະຊາດ. ພ້ອມນີ້, ກໍເພື່ອເປັນການປະຕິບັດຕາມ 4 ສ ທີ່ເມືອງລະມາມໄດ້ກຳນົດໄວ້ ໂດຍສະເພາະແມ່ນ ສ ສີຂຽວ ແລະ ປູກຈິດສຳນຶກໃຫ້ແກ່ເດັກໃຫ້ຮູ້ຈັກອະນຸລັກຮັກສາສິ່ງແວດລ້ອມ ແລະ ປູກຕົ້ນໄມ້ໃຫ້ເປັນປ່າທົດແທນຕົ້ນທີ່ເສຍໄປ ຫຼຸດຜ່ອນການປ່ຽນແປງສະພາບດິນຟ້າອາກາດ.

ໃນວັນຕໍ່ມາ, ສະພາປະຊາຊົນແຂວງເຊກອງ ໄດ້ຈັດພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ ຕິດພັນກັບວັນປູກຕົ້ນໄມ້ແຫ່ງຊາດ (1 ມິຖຸນາ 2023) ໂດຍການເຂົ້າຮ່ວມເປັນປະທານຂອງທ່ານ ນາງ ຄຳເສັງ ທຸມມະວົງສາ; ມີຄະນະເລຂາທິການ, ຄະນະກຳມະການ, 3 ອົງການຈັດຕັ້ງມະຫາຊົນ, ພະນັກງານ-ລັດຖະກອນ ພ້ອມດ້ວຍລູກຫຼານເຂົ້າຮ່ວມຢ່າງຄຶກຄື້ນ.

ໂອກາດດັ່ງກ່າວ, ທ່ານ ນາງ ຄຳເສັງ ທຸມມະວົງສາ ໄດ້ມີຄຳເຫັນຕໍ່ພິທີ ເຊິ່ງທ່ານໄດ້ກ່າວສະແດງຄວາມຊົມເຊີຍທີ່ຄະນະສະຫະພັນແມ່ຍິງສະພາປະຊາຊົນແຂວງ ພ້ອມດ້ວຍພະນັກງານ-ວິຊາການ ໄດ້ພ້ອມພຽງກັນຈັດງານນີ້ຂຶ້ນ ເຊິ່ງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ແມ່ນເປັນວັນທີ່ມີຄວາມໝາຍຄວາມສຳຄັນຫຼາຍ ເພາະເດັກນ້ອຍແມ່ນຜູ້ທີ່ຈະສືບທອດອະນາຄົດຂອງຊາດ ແລະ ການປູກຕົ້ນໄມ້ແມ່ນການສ້າງຊັບພະຍາກອນທຳມະຊາດ ເພື່ອໃຫ້ສິ່ງແວດລ້ອມອຳນວຍຄວາມສະດວກໃຫ້ແກ່ການດຳລົງຊີວິດ ແລະ ການພັດທະນາປະເທດຊາດ. ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງໃຫ້ພະນັກງານ-ລັດຖະກອນທຸກຄົນ ປະກອບສ່ວນໃນການສ້າງເດັກນ້ອຍອັນເປັນໜໍ່ແໜງຂອງປະເທດຊາດ ໃຫ້ກາຍເປັນຄົນທີ່ມີຄວາມຮູ້ຄວາມສາມາດ ເພື່ອມາພັດທະນະປະເທດຊາດ ແລະ ຈົ່ງພ້ອມກັນຜັນຂະຫຍາຍວັນສຳຄັນດັ່ງກ່າວນີ້ ໃຫ້ຍືນຍົງ ແລະ ເຂັ້ມແຂງຕະຫຼອດໄປ.

ໃນພິທີ, ຍັງໄດ້ຮັບຟັງກ່ຽວກັບປະຫວັດຄວາມເປັນມາຂອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ພ້ອມທັງສ້າງກິດຈະກຳປູກຕົ້ນໄມ້, ຖາມ-ຕອບຄວາມຮູ້ຮອບຕົວເອົາລາງວັນ ແລະ ແຈກຢາຍເຂົ້າໜົມໃຫ້ຫຼານນ້ອຍລູກຫຼານນຳອີກ.

**(ນາງ ນາລີວັນ)**



# ຮອງປະທານສະພາປະຊາຊົນແຂວງສາລະວັນ ຢ້ຽມຢາມ ໃຫ້ກຳລັງໃຈຜູ້ປະສົບອັກຄີໄພ

(ສພຊ) ທ້າຍເດືອນພຶດສະພາຜ່ານມາ, ທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງສາລະວັນ ສົມທົບກັບສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງສາລະວັນ ແລະ ເລຂາທິການສະພາປະຊາຊົນແຂວງ ໄດ້ເດີນທາງໄປຕິດຕາມ ແລະ ຢ້ຽມຢາມຖາມຂ່າວໃຫ້ກຳລັງໃຈຄອບຄົວຜູ້ປະສົບອັກຄີໄພໄໝ້ເຮືອນໝົດຫຼັງ ຂອງຄອບຄົວທ່ານ ມົ້ວ ກົ່ງມະນີ ອາຍຸ 72 ປີ ປະຊາຊົນບ້ານກະຊະໃຫຍ່ ເມືອງສາລະວັນ ແຂວງສາລະວັນ ເຊິ່ງເປັນເຮືອນໄມ້ສອງຊັ້ນ ຂະໜາດ 8x10 ປູ ແລະ ແອ້ມດ້ວຍແປ້ນໄມ້, ມຸງສັງກະສີ.



ເຫດການອັກຄີໄພໄໝ້ເຮືອນໄມ້ສອງຊັ້ນ ເກີດຂຶ້ນເວລາ 12:05 ໂມງ ຂອງວັນທີ 28 ພຶດສະພາ 2023 ສາເຫດເກີດຈາກໄຟຟ້າລັດວົງຈອນ ບວກກັບສະພາບອາກາດຮ້ອນອົບເອົ້າ, ຕໍ່ກັບເຫດການດັ່ງກ່າວ ອຳນາດການປົກຄອງບ້ານ, ເມືອງສາລະວັນ ໄດ້ປະສານລົດມອດໄພ ເພື່ອຊ່ວຍເຫຼືອມອດໄຟ ແຕ່ກໍ່ບໍ່ທັນເພາະໄຟໄໝ້ລຸກລາມຢ່າງຮຸນແຮງຈຶ່ງຊ່ວຍເຫຼືອບໍ່ທັນ ເຮັດໃຫ້ເຮືອນທ່ານ ມົ້ວ ກົ່ງມະນີ ໄຟໄໝ້ເສຍຫາຍໝົດຫຼັງ ໂຊກດີທີ່ບໍ່ມີໃຜບາດເຈັບ ຫຼື ເສຍຊີວິດຈາກເຫດການດັ່ງກ່າວ ເຊິ່ງມູນຄ່າເສຍຫາຍປະເມີນໃນເບື້ອງຕົ້ນແມ່ນ 270 ລ້ານກວ່າກີບ.

ທ່ານ ນາງ ສູນໄຖ ໄຊຍະແສງ ໄດ້ສະແດງເປັນຫ່ວງເປັນໄຍ ແລະ ຄວາມເສຍໃຈຕໍ່ກັບເຫດການອັກຄີໄພໄໝ້ເຮືອນຂອງຄອບຄົວຜູ້ເຄາະຮ້າຍດັ່ງກ່າວ ພ້ອມທັງໃຫ້ທິດຊີ້ນຳອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ຈົ່ງເຕົ້າໂຮມຄວາມສາມັກຄີຊ່ວຍແກ້ໄຂຫາທາງອອກຮ່ວມກັນ ແລະ ມີສະຕິລະວັງຕົວ ກວດກາຄືນສະພາບອຸປະກອນເຄື່ອງໃຊ້ໄຟຟ້າໃນຄົວເຮືອນຂອງຕົນ ເພື່ອປ້ອງກັນແຕ່ຫົວທີບໍ່ໃຫ້ມີເຫດການເກີດຂຶ້ນອີກ.

ໃນໂອກາດນີ້, ທ່ານ ນາງ ສູນໄຖ ໄຊຍະແສງ ຕາງໜ້າໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ ມອບເຄື່ອງອຸປະໂພກ (ໝອນ, ສາດ, ຜ້າຫົ່ມ) ລວມມູນຄ່າ 1 ລ້ານກີບ ເພື່ອເປັນການຊ່ວຍເຫຼືອແບ່ງເບົາບັນເທົາທຸກໃນເບື້ອງຕົ້ນ.

**(ດີລຳພົນ ພົມມະຈັນ)**

# ສພຂ ອັດຕະປື ສະເຫຼີມສະຫຼອງວັນເດັກນ້ອຍສາກົນ ຕິດພັນກັບວັນປູກຕົ້ນໄມ້ແຫ່ງຊາດ



(ສພຊ) ໃນວັນທີ 2 ມິຖຸນາ 2023 ທີ່ສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ຈັດພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ໂດຍມີຄະນະນຳຂອງສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນພ້ອມດ້ວຍລູກຫຼານຂອງພະນັກງານພາຍໃນ ສພຂ ເຂົ້າຮ່ວມເປັນຈຳນວນຫຼາຍ.

ໃນພິທີ, ທ່ານ ນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານສະພາປະຊາຊົນແຂວງ ໄດ້ມີຄຳເຫັນວ່າ: ວັນເດັກສາກົນທີ່ຕິດພັນກັບວັນປູກຕົ້ນໄມ້ແຫ່ງຊາດ ແຕ່ລະປີ ແມ່ນເຫດການພິເສດໜຶ່ງທີ່ມີຄວາມໝາຍຕໍ່ເດັກ ຈຸດປະສົງແນໃສ່ຊຸກຍູ້ສົ່ງເສີມ, ພັດທະນາ ແລະ ປົກປ້ອງເດັກໃນທົ່ວໂລກ; ຍ້ອນເຫັນໄດ້ຄວາມສຳຄັນຂອງເດັກທີ່ເປັນອະນາຄົດຂອງຊາດ, ເປັນເມັດພືດ, ເປັນໜໍ່ແໜງທົນຮອນແຫ່ງຊີວິດໃນມື້ນີ້ ເພື່ອກາຍເປັນອະນາຄົດອັນແຈ່ມໃສຂອງປະເທດຊາດໃນມື້ໜ້າ, ທົ່ວໂລກຈຶ່ງໄດ້ສະເຫຼີມສະຫຼອງວັນເດັກສາກົນ ຕາມເງື່ອນໄຂ. ພ້ອມກັນນີ້, ກໍຍັງຖືສຳຄັນ ແລະ ເອົາໃຈໃສ່ໃນການປູກຕົ້ນໄມ້ເພື່ອມີສະຕິຮັກ-ຫວງແຫນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ໃນການຄຸ້ມຄອງປົກປັກຮັກສາ ແລະ ພັດທະນາປ່າໄມ້ ເຮັດໃຫ້ປ່າໄມ້ມີຄວາມອຸດົມສົມບູນ, ເປັນເຫງົ້າພະລັງໃນການປົກປັກຮັກສາລະບົບນິເວດທຳມະຊາດ, ຊີວະນາໆພັນ, ແຫຼ່ງນ້ຳໃຫ້ຍືນຍົງຕະຫຼອດໄປ.

**(ວິມັດ)**



# ຕິດຕາມກວດກາ ການຈັດຕັ້ງປະຕິບັດ ກົດໝາຍ 6 ເດືອນຕົ້ນປີ 2023



(ສພຊ) ເພື່ອຮັບປະກັນການຈັດຕັ້ງປະຕິບັດຂອງຄະນະສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍ; ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18; ໃນລະຫວ່າງວັນທີ 7-11 ມິຖຸນາ 2023 ຢູ່ທີ່ເມືອງລ້ອງແຈ້ງ ແລະ ເມືອງທ່າໂທມ ແຂວງໄຊສົມບູນ ນຳໂດຍທ່ານ ແດງ ປະທຸມທອງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ທັງເປັນປະທານສະພາປະຊາຊົນແຂວງໄຊສົມບູນ ພ້ອມດ້ວຍບັນດາຫົວໜ້າ-ຮອງຫົວໜ້າພະແນກທີ່ກ່ຽວຂ້ອງ ແລະ ພະນັກງານຂອງສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍທີ່ຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໂດຍສະເພາະການຄຸ້ມຄອງການສຳຫຼວດ ແລະ ຂຸດຄົ້ນແຮ່ທາດທີ່ດຳເນີນກິດຈະການຢູ່ພາຍໃນແຂວງໄຊສົມບູນ.

ທັງນີ້, ກໍເພື່ອເສີມຂະຫຍາຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ໃນການຊຸກຍູ້ຕິດຕາມກວດກາອົງການບໍລິຫານລັດ ເພື່ອຊອກໃຫ້ເຫັນດ້ານດີ, ຂໍ້ຄົງຄ້າງ, ບັນດາທາງສຽງທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ ພ້ອມທັງເສີມຂະຫຍາຍດ້ານດີ ແລະ ແກ້ໄຂຂໍ້ຄົງຄ້າງ ສ້າງໃຫ້ອຳນາດລັດມີຄວາມເຂັ້ມແຂງຂຶ້ນເປັນກ້າວໆ ແລະ ເພື່ອເປັນບ່ອນອີງໃຫ້ແກ່ບັນດາເປົ້າໝາຍທີ່ຖືກກວດກາໄດ້ຮັບການຊຸກຍູ້ໃນການຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ, ມີຄຸນນະພາບ ແລະ ດຳເນີນໄປຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ທັງເປັນຂໍ້ມູນພື້ນຖານໃຫ້ຄະນະສະມາຊິກສະພາແຫ່ງຊາດຊຸດທີ IX ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ໃນການເກັບກຳຂໍ້ມູນ, ຊອກຫາວິທີແກ້ໄຂບາງດ້ານທີ່ເຫັນວ່າບໍ່ປະຕິບັດຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ໄດ້ກຳນົດໄວ້, ລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດເພື່ອມີທິດຊີ້ນຳບາງບັນຫາທີ່ຍັງມີຂໍ້ຄົງຄ້າງ ແລະ ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍສະເພາະການຈັດຕັ້ງປະຕິບັດກົດໝາຍທີ່ຕິດພັນກັບການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໂດຍສະເພາະການຄຸ້ມຄອງການສຳຫຼວດ ແລະ ການຂຸດຄົ້ນແຮ່ທາດທີ່ມາດຳເນີນກິດຈະການພາຍໃນແຂວງໄຊສົມບູນ.

ຜ່ານການຕິດຕາມກວດກາຄັ້ງນີ້ ພົບເຫັນບັນຫາທີ່ເກີດຂຶ້ນ ແລະ ມີຜົນກະທົບຕໍ່ພໍ່ແມ່ປະຊາຊົນພາຍໃນ 2 ເມືອງ ເປັນຕົ້ນແມ່ນຜົນກະທົບໃສ່ເຂດທຳການຜະລິດຂອງປະຊາຊົນ ເຊັ່ນ ບໍ່ມີນໍ້າໃຊ້, ບໍ່ມີນໍ້າທຳການຜະລິດ, ບໍ່ມີບ່ອນທຳມາຫາກິນ, ບາງບໍລິສັດຍັງບໍ່ທັນຊົດເຊີຍໃຫ້ປະຊາຊົນໝົດເທື່ອ, ລົດແກ່ແຮ່ເຮັດໃຫ້ເກີດມີຄວາມເສຍຫາຍເສັ້ນທາງເປ່ເພໜັກໜ່ວງ ເຮັດໃຫ້ປະຊາຊົນທ່ຽວໄປມາຫຍຸ້ງຍາກ. ນອກນັ້ນ, ຍັງເຮັດໃຫ້ງົວ-ຄວາຍຂອງປະຊາຊົນຕາຍຈຳນວນໜຶ່ງ.

ໂອກາດດັ່ງກ່າວ, ບັນດາພະແນກການໄດ້ຕິດຕາມກວດກາ ໄດ້ຮັບຟັງເຖິງບັນຫາຕ່າງໆຂອງເມືອງ ແລະ ບັນຫາຂອງປະຊາຊົນ ເພື່ອຊີ້ແຈງ ແລະ ແກ້ໄຂເຖິງບັນຫາທີ່ເກີດຂຶ້ນຂອງປະຊາຊົນທີ່ມັນເກີດຈາກການຂຸດຄົ້ນແຮ່ທາດໃຫ້ປະຊາຊົນເພື່ອຊອກຫາທາງອອກທີ່ດີກວ່າ.

**(ແສງຕາວັນ ລັດຕະນະວົງ)**

# ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ອຸດົມໄຊ ເຄື່ອນໄຫວອຽກງານ



(ສພຊ) ວັນພະຫັດວັນທີ 1 ມິຖຸນາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນສະພາປະຊາຊົນແຂວງໄດ້ເປີດກອງປະຊຸມຄົ້ນຄວ້າໜັງສືສະເໜີຂອງທ່ານເຈົ້າແຂວງ ໂດຍການເປັນປະທານຂອງທ່ານ ທອງໄຊ ທໍ່ຈິງເລ່ຍຈື ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນສະພາປະຊາຊົນແຂວງ, ມີຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າພະແນກການ, ຜູ້ກ່ຽວຂ້ອງ ແລະ ພະນັກງານຂະແໜງກ່ຽວຂ້ອງພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ເພື່ອປະຕິບັດຕາມທິດຊີ້ນຳຂອງທ່ານປະທານສະພາປະຊາຊົນແຂວງ ໄດ້ມອບໃຫ້ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ເປັນຜູ້ຄົ້ນຄວ້າໜັງສືສະເໜີຂອງທ່ານເຈົ້າແຂວງ ສະບັບເລກທີ 513/ອຊ, ລົງວັນທີ 9 ພຶດສະພາ 2023 (ກ່ຽວກັບການຫັນປ່ຽນທີ່ດິນກະສິກຳມາເປັນດິນປຸກສ້າງ) ເຊິ່ງໄດ້ສະເໜີຫາສະພາປະຊາຊົນແຂວງເພື່ອຄົ້ນຄວ້າ, ພິຈາລະນາຮັບຮອງເອົາການຫັນປ່ຽນທີ່ດິນຈາກດິນກະສິກຳມາເປັນດິນປຸກສ້າງໃຫ້ແກ່ທ່ານ ອາເຕີ ລາວລີ ຢູ່ບ້ານໜອງແມງດາ ເມືອງໄຊ ແຂວງອຸດົມໄຊ, ເພື່ອສ້າງສູນເຕົ້າໂຮມຖ່ຽນຖ່າຍສິນຄ້າ ແລະ ບໍລິການຈອດລົດຂົນສົ່ງສິນຄ້າຢູ່ຈຸດບ້ານນາສ້າວ ເມືອງໄຊ ແຂວງອຸດົມໄຊ ເຊິ່ງມີເນື້ອທີ່ທັງໝົດ 10 ເຮັກຕາ.

ກອງປະຊຸມໄດ້ຄົ້ນຄ້ວາປຶກສາຫາລືທາງດ້ານວິຊາການກັບພະແນກການທີ່ກ່ຽວຂ້ອງ, ມີການແລກປ່ຽນຄຳຄິດຄຳເຫັນ ແລະ ຄະນະກຳມະການໄດ້ລົງພື້ນທີ່ຕົວຈິງເຫັນວ່າດິນຕອນດັ່ງກ່າວ ການປະກອບເອກະສານຂອງບໍລິສັດແມ່ນໄດ້ມີໃບອະນຸຍາດຈາກພະແນກການທີ່ກ່ຽວຂ້ອງຂັ້ນແຂວງ, ດິນຕອນດັ່ງກ່າວ ປະຊາຊົນໄດ້ມອບກຳມະສິດໃຫ້ທາງບໍລິສັດ 100% ອອກຊື່ທ່ານ ອາເຕີ ລາວລີ (ບໍ່ມີຜົນສະທ້ອນລະຫວ່າງບໍລິສັດກັບ ປະຊາຊົນ), ບໍລິສັດໄດ້ດຳເນີນການຖົມດິນ, ກໍ່ສ້າງພື້ນຖານໂຄງລ່າງຈຳນວນໜຶ່ງແລ້ວ.

ຜ່ານການຄົ້ນຄວ້າບັນດາເອກະສານ ແລະ ກົດໝາຍທີ່ກ່ຽວຂ້ອງ ເຫັນວ່າ: ການຫັນປ່ຽນປະເພດທີ່ດິນກະສິກຳມາເປັນດິນປຸກສ້າງແມ່ນຖືກຕ້ອງສອດຄ່ອງຕາມກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ໄດ້ກຳນົດຄື: ມາດຕາ 25 (ປັບປຸງ) ການຫັນປ່ຽນປະເພດທີ່ດິນ: ການຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປເປັນທີ່ດິນປະເພດອື່ນ ຈະດຳເນີນໄດ້ກໍຕໍ່ເມື່ອຫາກເຫັນວ່າມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ເຊິ່ງເປັນສ່ວນໜຶ່ງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ໃຫ້ມີຜົນກະທົບທາງລົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ການຫັນປ່ຽນປະເພດທີ່ດິນດັ່ງກ່າວຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ມີສິດຕົກລົງຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 27, 28, 29 ແລະ 30 ຂອງກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ. ພ້ອມດຽວກັນນັ້ນ, ຄະນະກຳມະການ ແລະ ຄະນະຮັບຜິດຊອບກອງປະຊຸມຈະໄດ້ສືບຕໍ່ລາຍງານໃຫ້ທ່ານປະທານສະພາປະຊາຊົນແຂວງເພື່ອມີຄຳເຫັນ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ.

ໃນວັນດຽວກັນ, ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງອຸດົມໄຊ ໄດ້ເຄື່ອນໄຫວຕິດຕາມກວດກາຜົນກະທົບຈາກກິດຈະກຳຢູ່ສູນ 10 ແຂວງ, ບ້ານດອນແກ້ວ ເມືອງໄຊ ແຂວງອຸດົມໄຊ ນຳພາໂດຍທ່ານ ສີພອນ ອິນຕະວົງ ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ພ້ອມດ້ວຍທີມງານ.

ກິດຈະກຳທີ່ສູນດັ່ງກ່າວຈັດຕັ້ງປະຕິບັດ ມີການລ້ຽງໄກ່ພັນໄຂ່, ການລ້ຽງງົວ, ການກ້າເບ້ຍໄມ້ ແລະ ຍັງມີການຝຶກອົບຮົມວິຊາຊີບໃຫ້ແກ່ຜູ້ທີ່ສົນໃຈດ້ານກະສິກຳ.

ການຕິດຕາມກວດກາໃນຄັ້ງນີ້ ແມ່ນໄດ້ເຄື່ອນໄຫວຕິດຕາມກວດກາຜົນກະທົບຈາກກິດຈະກຳຂອງສູນ ເຊິ່ງຜ່ານການລົງຕິດຕາມກວດກາເຫັນວ່າບັນຫາຕົ້ນຕໍທີ່ມີຜົນກະທົບຕໍ່ກັບຊຸມຊົນແມ່ນກິ່ນເໝັນຈາກມູນສັດ ທີ່ສົ່ງກິ່ນໄປບໍລິເວນກວ້າງ ເຮັດໃຫ້ການດຳລົງຊີວິດຂອງພໍ່ແມ່ປະຊາຊົນມີຄວາມຫຍຸ້ງຍາກ. ດັ່ງນັ້ນ ສະພາປະຊາຊົນແຂວງ ກໍຄືຄະນະກຳມະການ ໄດ້ສະເໜີໃຫ້ທາງສູນປັບປຸງແກ້ໄຂບັນຫາດັ່ງກ່າວໂດຍການເຮັດອ່າງບຳບັດ ແລະ ແປຮູບມູນສັດໃຫ້ເປັນປຸຍເພື່ອຫຼຸດຜ່ອນບັນຫາດັ່ງກ່າວ.

**(ແສງພອນ ອິນນະລົງ ແລະ ແຂກ ເພັດໝູພັນ)**

# ເຊັນຂໍ້ຕົກລົງຮ່ວມ ວ່າດ້ວຍການປະສານງານ



ການລົງນາມຮ່ວມລະຫວ່າງ
ທ່ານ ຂວັນຕາ ດວງລາດີ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ ແລະ ທ່ານ ນາງ ສາທິດ ຈັນສີ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ

(ສພຊ) ພິທີເຊັນຂໍ້ຕົກລົງຮ່ວມວ່າດ້ວຍການປະສານງານລະຫວ່າງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງຄຳມ່ວນ ຮ່ວມກັບອົງການກວດກາລັດແຂວງ ແລະ ພະແນກການໃນຂົງເຂດເສດຖະກິດ ໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນທີ 7 ມິຖຸນາ 2023 ທີ່ສະພາປະຊາຊົນແຂວງຄຳມ່ວນ ໂດຍການເຂົ້າຮ່ວມເປັນສັກຂີພິຍານຂອງທ່ານ ນາງ ບົງອອນ ໄຊຍະສິດ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າພະແນກການຂອງແຂວງ, ຄະນະກຳມະການສະພາປະຊາຊົນແຂວງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ການເຊັນຂໍ້ຕົກລົງຮ່ວມໃນຄັ້ງນີ້, ເພື່ອກຳນົດຫຼັກການ, ຂັ້ນຕອນ, ລະບຽບການ ແລະ ວິທີການປະສານງານ ລະຫວ່າງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຮ່ວມກັບອົງການກວດກາລັດແຂວງ ແລະ ບັນດາພະແນກການໃນຂົງເຂດເສດຖະກິດ ກ່ຽວກັບການເຄື່ອນໄຫວອຽກງານ, ແນໃສ່ຈັດຕັ້ງປະຕິບັດການແກ້ໄຂຜົນການກວດສອບໃຫ້ມີຄວາມຖືກຕ້ອງ, ເປັນທຳ, ສາມາດເກັບກູ້ຜົນເສຍຫາຍທາງດ້ານຊັບສິນຂອງລັດຄືນຢ່າງຄົບຖ້ວນ ເຮັດໃຫ້ຜູ້ກະທຳຜິດມີສະຕິ ແລະ ຫຼຸດຜ່ອນການລະເມີດວິໄນແຜນການ-ການເງິນ ແລະ ກ້າວໄປເຖິງ ໃຫ້ຢຸດຕິການລະເມີດຢ່າງຂາດຕົວເທື່ອລະກ້າວ, ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງ ແລະ ເຄື່ອນໄຫວອຽກງານ ໃຫ້ສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ໄດ້ຮັບຜົນດີ.

ໃນພິທີເຊັນຂໍ້ຕົກລົງຄັ້ງນີ້, ໄດ້ລົງນາມໂດຍຝ່າຍຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ແມ່ນທ່ານ ນາງ ສາທິດ ຈັນສີ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນສະພາປະຊາຊົນແຂວງຄຳມ່ວນ ແລະ ຝ່າຍອົງການກວດກາລັດແຂວງໂດຍແມ່ນທ່ານຄຳສອນ ອວ້ນທະວີ ປະທານອົງການກວດກາລັດແຂວງ ແລະ ສຳລັບພະແນກການໃນຂົງເຂດເສດຖະກິດ ທີ່ລົງນາມໃນຄັ້ງນີ້ປະກອບມີຄື : ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ເຊິ່ງລົງນາມໂດຍບັນດາທ່ານຫົວໜ້າພະແນກການດັ່ງກ່າວ.

ຂໍ້ຕົກລົງ 6 ສະບັບດັ່ງກ່າວ ໄດ້ກຳນົດຫຼັກການ, ລະບຽບການ, ຂັ້ນຕອນ, ວິທີການ ແລະ ກົນໄກການພົວພັນປະສານງານຮ່ວມກັນ ເພື່ອເປັນເອກະພາບໃນຄວາມຮັບຜິດຊອບຂອງແຕ່ລະຝ່າຍບົນພື້ນຖານການຄົ້ນຄວ້າ, ສະໜອງຂໍ້ມູນ-ຂ່າວສານ, ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດເຄື່ອນໄຫວອຽກງານໃຫ້ມີວ່ອງໄວ, ຮັດກຸມ ແລະ ທັນເວລາ.

**(ເອື້ອ ມະໂນສິງ)**




# ກົດໝາຍ ວ່າດ້ວຍການວິຈິດສິນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 19 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

## ກົດໝາຍ
## ວ່າດ້ວຍວິຈິດສິນ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການຕິດຕາມ ກວດກາ ການເຄື່ອນໄຫວວຽກງານວິຈິດສິນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ດຳເນີນໄປຢ່າງຖືກຕ້ອງ, ມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ສົ່ງເສີມຫົວຄິດປະດິດສ້າງ ໃນການສ້າງ, ປົກປັກຮັກສາ, ຟື້ນຟູ, ອະນຸລັກ, ພັດທະນາ ແລະ ຊົມໃຊ້ຜົນງານດ້ານວິຈິດສິນ, ຮັກສາເອກະລັກ, ພູມປັນຍາ, ມູນເຊື້ອທາງດ້ານວັດທະນະທຳອັນດີງາມຂອງຊາດໃຫ້ຍືນຍົງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ວິຈິດສິນ**

ວິຈິດສິນ ແມ່ນຜົນງານສິລະປະທີ່ມະນຸດສ້າງຂຶ້ນ ຈາກຄຸນຄ່າອັນລວມຍອດ ດ້ວຍພູມປັນຍາ, ພອນສະຫວັນ, ອາລົມຈິດ ບວກກັບສີມືອັນປານີດ ເພື່ອຄວາມງົດງາມ, ຄວາມເອກອ້າງທະນົງໃຈ ຊຶ່ງມີຄຸນຄ່າທາງດ້ານຈິດໃຈໂດຍບໍ່ສິ້ນສຸດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ອະນຸສາວະລີ ໝາຍເຖິງຜົນງານປະຕິມາກຳ ແລະ ສະຖາປັດຕະຍະກຳ ທີ່ສ້າງຂຶ້ນໄວ້ເປັນທີ່ລະນຶກເຖິງຄຸນງາມຄວາມດີຂອງບຸກຄົນ, ເຫດການສຳຄັນທາງດ້ານປະຫວັດສາດຂອງຊາດ ເປັນຕົ້ນ ຮູບປັ້ນຜູ້ນຳ, ວິລະບູລຸດ, ວິລະຊົນ, ທາດນັກຮົບນິລະນາມ, ສະຖານທີ່ປະຫວັດສາດ;
2. ການອະນຸລັກຜົນງານດ້ານວິຈິດສິນ ໝາຍເຖິງ ການຮັກສາໄວ້ຊຶ່ງຄຸນຄ່າທາງສິລະປະດ້ານວັດທະນະທຳ, ປະຫວັດສາດ ເພື່ອບໍ່ໃຫ້ເຊື່ອມໂຊມ ແລະ ສູນຫາຍໄປຕາມການເວລາ;
3. ການກ່າຍ ຫຼື ລອກແບບ ຜົນງານດ້ານວິຈິດສິນ ໝາຍເຖິງການສ້າງຂຶ້ນໃໝ່ໂດຍກ່າຍເອົາແບບເກົ່າ, ສີສັນ, ລວດລາຍ, ຮູບຮ່າງລັກສະນະວັດຖຸ ຫຼື ຮູບແບບດັ່ງເດີມ;
4. ຂະມຸ ໝາຍເຖິງວັດສະດຸທີ່ເຮັດດ້ວຍຂີ້ເຖົ່າກົກໂພ ຫຼື ຂີ້ເຖົ່າອື່ນ, ນ້ຳກ້ຽງ, ຢາງບົງ ສຳລັບຫຼໍ່ລວດລາຍປະດັບໃສ່ຕູ້, ພຣະພຸດທະຮູບ, ຫໍທຳມາດ, ກະໂຈມ, ຫົວໂຂນ ແລະ ອື່ນໆ;
5. ສິລະປິນອາຊີບ ໝາຍເຖິງບຸກຄົນ, ນິຕິບຸກຄົນທີ່ເຄື່ອນໄຫວວຽກງານວິຈິດສິນເປັນອາຊີບຕົ້ນຕໍ ເຊັ່ນ ການແຕ້ມ, ການປັ້ນ, ການຄວັດ, ການອອກແບບງານສິນ ແລະ ຫັດຖະກຳສິນ;
6. ສິລະປິນເຄິ່ງອາຊີບ ໝາຍເຖິງບຸກຄົນ, ນິຕິບຸກຄົນ ທີ່ເຄື່ອນໄຫວວຽກງານວິຈິດສິນເປັນອາຊີບສຳຮອງ ຄຽງຄູ່ກັບອາຊີບອື່ນ;
7. ສິລະປິນສະໝັກຫຼິ້ນ ໝາຍເຖິງ ບຸກຄົນ, ນິຕິບຸກຄົນທີ່ມີຄວາມມັກທາງດ້ານວິຈິດສິນໂດຍບໍ່ໄດ້ຜ່ານການຮຽນ ແຕ່ຫາກໄດ້ເຄື່ອນໄຫວເປັນບາງຄັ້ງຄາວ, ບາງໄລຍະ ຕາມກາລະໂອກາດ ແລະ ເງື່ອນໄຂ;
8. ປູນປຣາສເຕີ ໝາຍເຖິງປູນຂາວສຳລັບຫຼໍ່ແບບ, ປັ້ນແບບ ທີ່ມີຄຸນສົມບັດທີ່ແຂງໂຕໄວ;
9. ສີອະຄຣີລິກ (ACRYLIC) ໝາຍເຖິງສີນ້ຳສຳລັບໃຊ້ໃນການແຕ້ມຮູບທຸກຊະນິດ ຊຶ່ງມີຄຸນນະພາບດີກວ່າສີນ້ຳ ແລະ ສີໂປສເຕີ;
10. ສີໂປສເຕີ ໝາຍເຖິງ ສີນ້ຳສຳລັບໃຊ້ໃນການແຕ້ມຮູບທຸກຊະນິດ ຊຶ່ງບໍ່ສາມາດກັນນ້ຳໄດ້;
11. ສາສະນະສະຖານ ໝາຍເຖິງສະຖານທີ່ທາງດ້ານສາສະໜາ ເຊັ່ນ ວັດ, ສິມ, ກຸດຕິ, ຫໍແຈກ, ຫໍໄຕ, ຫໍກອງ, ຫໍພະ, ປະຕູໂຂງ, ທາດ, ຫໍຫຼັກເມືອງ, ຫໍາມະສະພາ ແລະ ບ່ອນສັກກາລະບູຊາອື່ນ;
12. ສະກຸນຊ່າງວິຈິດສິນ ໝາຍເຖິງບຸກຄົນທີ່ເປັນນາຍຊ່າງສະເພາະດ້ານວິຈິດສິນ ສາຂາຕ່າງໆ ເປັນຕົ້ນ ຊ່າງປັ້ນ, ແຕ້ມ, ຄວັດ, ຕິດມຸກ, ຕິດຄຳປີວ ແລະ ສິລະປະໂລຫະ;
13. ສິລະປະ ໝາຍເຖິງການສ້າງສັນຜົນງານດ້ານວິຈິດສິນ ດ້ວຍພູມປັນຍາ, ພອນສະຫວັນ, ອາລົມຈິດ ບວກກັບສີມືອັນປານີດ ເປັນຕົ້ນ ການແຕ້ມ, ຄວັດ, ປັ້ນ, ຫຼໍ່.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານວິຈິດສິນ**

ລັດ ສົ່ງເສີມ ແລະ ໃຫ້ຄວາມສຳຄັນ ວຽກງານວິຈິດສິນ ໃຫ້ມີການຂະຫຍາຍຕົວ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບ ດ້ວຍການສ້າງ, ພັດທະນາ ແລະ ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ, ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ.

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂ ອຳນວຍຄວາມສະດວກໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ແລະ ມີສ່ວນຮ່ວມໃນການຄົ້ນຄວ້າວິໄຈ, ການປະດິດສ້າງ, ການພັດທະນາຜົນງານ, ການເຜີຍແຜ່ຄຸນຄ່າ ແລະ ອະນຸລັກ ຜົນງານດ້ານວິຈິດສິນທີ່ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ ພ້ອມທັງຊຸກຍູ້ ແລະ ສົ່ງເສີມ ໃຫ້ສ້າງສະຖານການສຶກສາ, ສ້າງວິຊາຊີບ ແລະ ຜະລິດຕະພັນວິຈິດສິນ ໃຫ້ມີຄວາມອຸດົມຮັ່ງມີ, ຫຼາຍຮູບ ຫຼາຍສີ ແລະ ເປັນສິນຄ້າ.

ລັດ ຮັບຮູ້ ແລະ ປົກປ້ອງກຳມະສິດ, ລິຂະສິດກ່ຽວກັບຜົນງານດ້ານວິຈິດສິນຂອງບຸກຄົນ, ນິຕິບຸກ ຄົນ ແລະ ການຈັດຕັ້ງທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ຜົນງານ ດ້ານວິຈິດສິນ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານວິຈິດສິນ**

ການເຄື່ອນໄຫວວຽກງານວິຈິດສິນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບປະກັນ ລັກສະນະຊາດ, ມະຫາຊົນ, ກ້າວໜ້າ, ວິທະຍາສາດ ແລະ ທັນສະໄໝ;
3. ຮັບປະກັນ ລັກສະນະເຄົ້າເດີມ, ປົກປັກຮັກສາ, ຟື້ນຟູ, ອະນຸລັກ ແລະ ເສີມຂະຫຍາຍຄຸນຄ່າຂອງຜົນງານດ້ານວິຈິດສິນ;
4. ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;
5. ຮັບປະກັນການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງການມີສ່ວນຮ່ວມຂອງມະຫາຊົນ.

**ມາດຕາ 6 ສິດ ແລະ ພັນທະ ຂອງພົນລະເມືອງກ່ຽວກັບວຽກງານວິຈິດສິນ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ ມີສິດໃນການເຄື່ອນໄຫວ ແລະ ການຄົ້ນຄວ້າສ້າງຜົນງານດ້ານວິຈິດສິນ ແລະ ປະກອບກິດຈະການ, ປະກອບຄຳເຫັນຕໍ່ຜົນງານ, ຜະລິດຕະພັນສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ອາໄສ ຫຼື ເຄື່ອນໄຫວ ຢູ່ ສປປລາວ ລ້ວນແຕ່ມີພັນທະໃນການປົກປັກຮັກສາ, ອະນຸລັກຜົນງານດ້ານວິຈິດສິນທີ່ມີຄຸນຄ່າຂອງຊາດ ແລະ ຂອງທ້ອງຖິ່ນ.

ຄົນລາວຢູ່ຕ່າງປະເທດ ກໍສາມາດປະກອບສ່ວນເຂົ້າໃນການປົກປັກຮັກສາ, ອະນຸລັກ, ພັດທະນາ ແລະ ຊົມໃຊ້ ຜົນງານດ້ານວິຈິດສິນຂອງຊາດ ແລະ ຂອງທ້ອງຖິ່ນ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານວິຈິດສິນ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບວຽກງານວິຈິດສິນ ລວມທັງການສ້າງກິດຈະກຳຮ່ວມກັນ, ການຝຶກອົບຮົມ, ການເຜີຍແຜ່ແລະ ການວາງສະແດງຜົນງານດ້ານວິຈິດສິນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ ແລະ ປະສິດທິພາບ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ປະເພດ, ລັກສະນະ ແລະ ລະດັບ ຂອງວິຈິດສິນ
## ໝວດທີ 1
## ປະເພດຂອງວິຈິດສິນ

**ມາດຕາ 9 ປະເພດຂອງວິຈິດສິນ**

ວິຈິດສິນ ມີຫົກປະເພດ ດັ່ງນີ້:

1. ຈິດຕະກຳ;
2. ປະຕິມາກຳ;
3. ສິລະປະພາບພິມ;
4. ນິເທດສິນ;
5. ສະຖາປັດຕະຍະກຳສິນ;
6. ຫັດຖະກຳສິນ.

**ມາດຕາ 10 ຈິດຕະກຳ**

ຈິດຕະກຳ ແມ່ນ ການແຕ້ມດ້ວຍ ສໍ, ສີນ້ຳ, ສີນ້ຳມັນ, ສີໂປສເຕີ, ສີອະຄຣີລິກ, ສໍຖ່ານຄາບອນ ແລະ ການແຕ້ມດ້ວຍວັດຖຸອື່ນ ລົງໃສ່ວັດສະດຸ ເຊັ່ນ ເຈ້ຍ, ໄມ້ອັດ, ຜ້າແພ, ຝາ ຫຼື ວັດສະດຸອື່ນ ໃຫ້ອອກມາເປັນຜົນງານທີ່ເປັນຮູບແຕ້ມ ທີ່ມີຫຼາຍລັກສະນະ, ຮູບແບບ ແລະ ເນື້ອໃນ ເປັນຕົ້ນ ຮູບເໝືອນຄົນ, ຮູບສັດ, ຮູບທຳມະຊາດ, ຮູບຊີວິດປະຈຳວັນ, ຮູບປະກອບເລື່ອງ, ຮູບສິ່ງວັດຖຸ.

ອ່ານຕໍ່ສະບັບໜ້າ...

SCNG
SOMCHAYNEUK GROUP




# ເຮັດພຽງພິທີກຳ ຫຼື ເຮັດພໍ່ແລ້ວຮີດ?

# ຕົ້ນກົບເມກ

ເດືອນ 4 ລາວ ບຸນພະເຫວດທີ່ຊາວພຸດລາວກຳລັງນິຍົມເຮັດໃນໄລຍະເດືອນ 4 ຜ່ານມາ ເປັນປາງບຸນສຳຄັນທາງພຸດທະສາສະໜາ ຈັດຢູ່ໃນປາງບຸນ 12 ເດືອນ; ຜູ້ຂຽນຕັ້ງຄຳຖາມຫົວຂໍ້ຂ້າງເທິງນັ້ນ ເພື່ອວ່າທ່ານຜູ້ອ່ານໄດ້ຄິດນຳກັນວ່າ: ເວລາເຮົາເຮັດບຸນ ເຮົາຈະໄດ້ສາລະແກ່ນສານ ຫຼື ເຮັດເພື່ອໃຫ້ແລ້ວຮີດຄອງ ຫຼື ວ່າເຮັດເອົາຄວາມມ່ວນຊື່ນບັນເທີງມີເຫຼົ້າຢາປາແປ້ງ ເຊິ່ງອາດມີຄຳຕອບຫຼາຍແບບ ບາງຄົນກໍບອກວ່າເຮັດໄປຕາມຮີດພໍ່ແມ່ພາເຮັດ.

ຜູ້ຂຽນຕັ້ງຂໍ້ສັງເກດວ່າ: ຍຸກພໍ່ແມ່ເຮົາພາເຮັດນັ້ນ ເພິ່ນບໍ່ໄດ້ມຸ່ງຄວາມມ່ວນເປັນສິ່ງສຳຄັນ ແຕ່ເພິ່ນມຸ່ງໃຫ້ເຂົ້າໃຈສິນທຳ ແລະ ເວລາຟັງພະເທດເພິ່ນມຸ່ງຈື່ຈຳເອົາບົດຮຽນຊີວິດ-ຈື່ຈຳເອົາແນວຄິດສະຕິປັນຍາທີ່ແຝງໄວ້ໃນກັນເທດແຕ່ລະກັນ ແລະ ຈື່ຈຳເອົາທັງແນວດີ-ບໍ່ດີ ເພື່ອບອກສອນລູກຫຼານໃຫ້ປະພຶດເປັນຕົວຢ່າງ.




ຜູ້ຂຽນຈະບໍ່ເວົ້າລະອຽດໃນແງ່ພິທີກຳ ແຕ່ຂໍຍົກບາງປະເດັນທີ່ສຳຄັນຂອງແກ່ນເລື່ອງ ເຊິ່ງຢູ່ທີ່ປະເດັນການໃຫ້ທານຂອງພະເຫວດສັນດອນ ເພື່ອສ້າງສັງຄົມໃຫ້ເກີດຄວາມສາມັກຄີ-ເມດຕາຕໍ່ກັນ; ຖ້າຈະຕີຄວາມວ່າ: ພະເຫວດເປັນໃຜ, ມີຖານະແບບໃດ ກໍສາມາດຕອບໄດ້ວ່າ ພະເຫວດເປັນນັກປົກຄອງທີ່ສະຫຼາດເຫັນແກ່ສ່ວນລວມ ແລະ ພະເຫວດຍັງເປັນຄົນລວຍ ເປັນເສດຖີທີ່ມີຈິດໃຈເສຍສະຫຼະຊັບສ່ວນຕົວເພື່ອຊາດ ແລະ ສັງຄົມ ເຊິ່ງເປັນຕົວຢ່າງໃນການສ້າງສັງຄົມໃຫ້ມີຄວາມສຸກ; ການໃຫ້ທານຂອງພະເຫວດ ເພື່ອໃຫ້ແຕ່ລະຄົນໃນສັງຄົມໄດ້ເກີດຄວາມສຸກ ແລະ ວິທີການດຳເນີນຊີວິດ ແກ້ໄຂບັນຫາຊີວິດແມ່ນໃຊ້ປັນຍາເປັນໂຕນຳທາງ.

ນາງ ມັດທີ ເປັນເມຍຕົວຢ່າງ ທີ່ຮ່ວມສຸກຮ່ວມທຸກ; ກັນຫາ ຊາລີ ກໍເປັນລູກແບບຢ່າງ ກະຕັນຍູຟັງຄວາມພໍ່ແມ່, ພາມເຖົ້າກໍເປັນແບບຢ່າງຂອງຄົນມັກໄດ້ ໂລພາກິນຈົນທ້ອງແຕກ... ຄຸນນະທຳໃນແຕ່ລະໂຕລະຄອນ ມັນສາມາດສອນຊີວິດຈິງຄົນໄດ້; ການເຮັດບຸນບໍ່ຄວນພຽງເພື່ອສືບທອດ-ຮັກສາຮີດຄອງ ແຕ່ຄວນຈະເຂົ້າໃຈແກ່ນແທ້; ບອກສອນສິນທຳສະຕິປັນຍາໃຫ້ທຸກຄົນໄດ້ຮູ້ ບໍ່ແມ່ນວ່າແລ້ວບຸນລະເມົາຈົນລຸກບໍ່ຂຶ້ນ ເພາະພະເທດຢູ່ວັດ ສ່ວນໂຍມເມົາຢູ່ເຮືອນ!




## ວິທີເຮັດວຽກ

### ພາກທີ 4
### ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)

ຖ້າຫາກພົບເຫັນຜົນປະໂຫຍດສ່ວນລວມຂອງພັກ ຂັດແຍ່ງກັນກັບຜົນປະໂຫຍດສ່ວນຕົວບຸກຄົນ, ກໍຕ້ອງເດັດດ່ຽວເສຍສະຫຼະຜົນປະໂຫຍດສ່ວນຕົວໃຫ້ແກ່ຜົນປະໂຫຍດສ່ວນລວມຂອງພັກສະເໝີ, ຖ້າຫາກຕ້ອງການເຖິງການເສຍສະຫຼະຊີວິດ ແລະ ເລືອດເນື້ອຂອງຕົນ ກໍຕ້ອງຍິນດີເສຍສະຫຼະຊີວິດ ແລະ ເລືອດເນື້ອຂອງຕົນ ກໍຕ້ອງຍິນດີເສຍສະຫຼະເພື່ອພັກ ເພື່ອປະເທດຊາດ ແລະ ປະຊາຊົນ.

ພະນັກງານແຕ່ລະຄົນ ສະມາຊິກຂອງພັກແຕ່ລະຄົນ ຕ້ອງເຂົ້າໃຈ, ແລ້ວກໍຕ້ອງປະຕິບັດດັ່ງເວົ້າມາຂ້າງເທິງນີ້, ຍ້ອນວ່າເຂົ້າໃຈ ແລະ ປະຕິບັດ ດັ່ງນັ້ນ, ໃນພັກເຮົາຈຶ່ງມີສະມາຊິກຜູ້ກ້າຫານສະຫຼະຊີວິດເພື່ອພັກ ເພື່ອຊາດ ເພື່ອປະເທດ ຈົນມີຊື່ສຽງອັນຫອມຫວນຕະຫຼອດຊົ່ວການອັນຍາວນານ ສະມາຊິກຜູ້ກ້າຫານດັ່ງກ່າວນັ້ນ ໄດ້ເປັນແວ່ນແຍງໃນດ້ານນ້ຳໃຈກ້າຫານໃຫ້ສະມາຊິກຂອງພັກ ແລະ ພະນັກງານຂອງພັກເຮົາເຮັດຕາມໝົດທຸກຄົນ.

ສ່ວນຫຼາຍ ຜົນປະໂຫຍດຂອງສ່ວນຕົວບຸກຄົນ ກໍມັກເຂົ້າເກາະກັບຜົນປະໂຫຍດຂອງພັກ, ເຊັ່ນວ່າພະນັກງານ ແລະ ສະມາຊິກຂອງພັກ ຮັກສາສຸຂະພາບຂອງຕົນ ເພື່ອເຮັດວຽກໃຫ້ແກ່ພັກ, ມັກຮ່ຳຮຽນເພື່ອຍົກລະດັບຄວາມຮູ້ຂອງຕົນໃຫ້ສູງຂຶ້ນ ປະຕິບັດຖືກຕາມຫຼັກ: ໝັ່ນປະຢັດສັດທ່ຽງ ເພື່ອໃຫ້ປະຊາຊົນເຊື່ອຖື ຮັກແພງ ແລະ ນັບຖືຜົນປະໂຫຍດສ່ວນຕົວດັ່ງກ່າວນັ້ນເປັນການຖືກຕ້ອງ ພັກຫວັງຢາກໃຫ້ພະນັກງານ ແລະ ສະມາຊິກຂອງພັກເຮັດແນວນັ້ນ.

ແຕ່ວ່າ ນອກຈາກສິ່ງເຫຼົ່ານັ້ນ ເຊັ່ນການຢາກໄດ້ຖານະຕຳແໜ່ງ ຊອກວິທີຫາກໄລ່ອອກໜ້າ ອວດອ້າງວ່າຕົນເປັນວິລະຊົນ, ຂີ້ອິ່ງຖືຕົວ ແລະ ອື່ນໆ ໃນທຳນອງນັ້ນ ແມ່ນຝືນກັບຜົນປະໂຫຍດຂອງພັກທັງມວນ.

ອ່ານຕໍ່ສະບັບໜ້າ...

# ພຶດຕິກຳທີ່ບໍ່ຄວນເຮັດ ໃນເວລາຢູ່ຫ້ອງການ

#ຜູ້ອື່ນ

**1. ຄອບວ່າບໍ່ສະບາຍຕະຫຼອດ:** ຫ້າມເປັນຄົນທີ່ຄອບວ່າບໍ່ສະບາຍເລື້ອຍໆ ເພາະຄົນຢູ່ໃນຫ້ອງການ ບໍ່ມີໃຜເບິ່ງບໍ່ອອກວ່າເປັນເລື່ອງແທ້ ຫຼືຕົວະ ແລະ ແນ່ນອນວ່າ ຖ້າເຮົາຄອບວ່າບໍ່ສະບາຍຕະຫຼອດ ຄົນທີ່ຈະເບື່ອໜ່າຍເຮົາທີ່ສຸດ ກໍຄືເພື່ອນຮ່ວມງານ ທີ່ຕ້ອງມານັ່ງຮັບຜິດຊອບວຽກແທນເຮົາເລື້ອຍໆ;

**2. ມາຊ້າເປັນປະຈຳແຖມຍັງຫາຂໍ້ອ້າງມາເວົ້າ:** ລົດຫຼາຍ, ບໍ່ສະບາຍ, ໄປວຽກຄອບຄົວ, ອາຫານເປັນພິດ ສາລະພັດເຫດຜົນທີ່ເຮັດໃຫ້ມາວຽກຊ້າຕະຫຼອດຈົນຕ້ອງຫາຂໍ້ອ້າງ; ລອງຄິດເບິ່ງວ່າ ມັນດີແລ້ວບໍ ທີ່ເຮົາຕ້ອງມານັ່ງແກ້ຕົວຕະຫຼອດ ຮູ້ສຶກເມື່ອຍບໍ່? ທາງທີ່ດີຄວນເຊົາມາວຽກຊ້າ ແລະ ຊື່ສັດກັບຕົນເອງ, ພະຍາຍາມຕື່ນແຕ່ເຊົ້າ ໄປເຮັດວຽກໃຫ້ທັນໂມງທັນເວລາ;

**3. ແຂງກະດ້າງບໍ່ຍອມຄົນ:** ເຖິງວ່າເຮົາຈະເປັນຄົນທີ່ບອກວ່າ ເຮົາເປັນຄົນກົງໄປກົງມາ ແຕ່ຫົວໜ້າ ຫຼື ເພື່ອນຮ່ວມງານ ອາດຈະແຍກອອກວ່າເຮົາເປັນຄົນຫົວແຂງ ຫຼື ເປັນຄົນເວົ້າກົງ; ສະນັ້ນ, ຄວນປັບປ່ຽນນິໄສໃໝ່ ເພາະຖ້າເຮົາຫົວດື້ ບໍ່ຍອມຟັງໃຜ ມັນອາດຈະເຮັດໃຫ້ເຮົາພາດໂອກາດດີໆໄດ້;

**4. ເອົາວຽກນອກມາເຮັດໃນຫ້ອງການ:** ເລື່ອງນີ້ເປັນເລື່ອງໃຫຍ່ ເພາະບໍ່ມີໃຜທີ່ຈະຢາກໃຫ້ເອົາເວລາເຮັດວຽກໃນອົງກອນ ໄປເຮັດວຽກຢ່າງອື່ນ ຖືວ່າຫ້າມເດັດຂາດ ເພາະມັນຈະສົ່ງຜົນທີ່ບໍ່ດີຢ່າງແນ່ນອນໃຫ້ແກ່ຕົນເອງ; ສະນັ້ນ; ວຽກນອກຄວນໃຊ້ເວລານອກໂມງໃນຫ້ອງການຈະເປັນການດີທີ່ສຸດ;

**5. ຈັບກຸ່ມເວົ້າຂວັນ:** ເປັນພຶດຕິກຳທີ່ບໍ່ດີ ແລະ ເສຍຄຸນສົມບັດທີ່ສຸດ ລອງຄິດເບິ່ງວ່າ ຖ້າແຕ່ລະມື້ ໃນຫ້ອງການມີແຕ່ຜູ້ມັກເວົ້າຂວັນກັນບັນຍາກາດພາຍໃນບ່ອນເຮັດວຽກຈະເປັນແນວໃດ; ສະນັ້ນ, ຢ່າຫຼິ້ງເຂົ້າໄປໃນວົງວຽນແບບນັ້ນເດັດຂາດ.

**6. ເວົ້າເລື່ອງວ່າຈະລາອອກ:** ພຶດຕິກຳແບບນີ້ ບໍ່ມີໃຜຮັບໄດ້ແນ່ນອນ ໃຜທີ່ມັກເວົ້າໂອ້ອວດວ່າຕົວເອງມີດີໄປຢູ່ໃສກໍໄດ້ນັ້ນ ຈະເຮັດໃຫ້ຕົນເອງຂາດຄວາມເຊື່ອໝັ້ນ ແລະ ເຮັດໃຫ້ບໍ່ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈ ໃນການປະຕິບັດໜ້າທີ່ວຽກງານອີກຕໍ່ໄປ; ດັ່ງນັ້ນ, ໃຫ້ຢຸດຕິພຶດຕິກຳທີ່ເວົ້າວ່າ ຢາກລາອອກ ແລ້ວຕັ້ງໜ້າຕັ້ງໃຈປະຕິບັດໜ້າທີ່ວຽກງານຂອງຕົນ;

**7. ຕໍ່ວ່າ ຫຼື ເວົ້າຂວັນຫົວໜ້າ:** ພຶດຕິກຳນີ້ ຖືວ່າຮ້າຍແຮງທີ່ສຸດ ເພາະການຕໍ່ວ່າ ຫຼື ນິນທາຫົວໜ້າ ຖືວ່າເປັນການບໍ່ໃຫ້ກຽດກັນຢ່າງຮຸນແຮງ ບໍ່ວ່າເຮົາຈະບໍ່ພໍໃຈ ຫຼືບໍ່ມັກໃນຕົວຂອງເຂົາປານໃດກໍຕາມ ທາງທີ່ດີຄວນຫາໂອກາດເວົ້າລົມສ່ວນຕົວ ຕ່າງຝ່າຍຈະໄດ້ຕ່າງຮູ້ເຖິງບັນຫາ ແລະ ຊອກວິທີປັບປຸງແກ້ໄຂ ການເຮັດວຽກກໍຈະດີຂຶ້ນ ແຖມບັນຍາກາດໃນບ່ອນເຮັດວຽກກໍຈະດີຂຶ້ນອີກດ້ວຍ;

**8. ບໍ່ເຂົ້າສັງຄົມໃນບ່ອນເຮັດວຽກ:** ຫາກໃນຫ້ອງການມີງານສ້າງສັນ ແຕ່ເຮົາມັກທີ່ຈະປະຕິເສດບໍ່ໄປຮ່ວມເລື້ອຍໆ ຖືວ່າເປັນສິ່ງທີ່ບໍ່ດີ ເພາະມັນໝາຍເຖິງວ່າເຮົາປະຕິເສດທີ່ຈະເປັນສັງຄົມດຽວກັນກັບເພື່ອນຮ່ວມງານ; ດັ່ງນັ້ນ, ຄວນຫາໂອກາດທີ່ຈະໄປຮ່ວມກິດຈະກຳ ຫຼື ງານສ້າງສັນ ທີ່ທາງຫ້ອງການຈັດຂຶ້ນ ເພື່ອເປັນການສ້າງຄວາມສາມັກຄີລະຫວ່າງພະນັກງານພາຍໃນຫ້ອງການ;

**9. ເວົ້າແຕ່ເລື່ອງສ່ວນຕົວ:** ແນ່ນອນວ່າ ຖ້າເຮົາພົບກັນມື້ທຳອິດ ແລ້ວເວົ້າລົມແຕ່ເລື່ອງສ່ວນຕົວ ເຮົາຈະຮູ້ສຶກລຳຄານພຽງໃດ ສະນັ້ນ, ຄວນຟັງຄົນອື່ນ ບໍ່ຄວນເວົ້າແຕ່ເລື່ອງສ່ວນຕົວຂອງເຮົາໃຫ້ເພື່ອນຮ່ວມງານຟັງ ເພາະເຂົາອາດຈະຮູ້ສຶກເບື່ອໜ່າຍ ແລະ ສຸດທ້າຍກໍຈະມີໃຜຢາກເວົ້າຢາກລົມກັບເຮົາ ການເຮັດວຽກຮ່ວມກັນຄວນຮັກສາຄວາມສຳພັນກັບເພື່ອນຮ່ວມງານ ໂດຍການຫຼຸດການເວົ້າລົມເລື່ອງສ່ວນຕົວ ແລ້ວລອງຫາປະເດັນທີ່ທຸກຄົນກຳລັງໃຫ້ຄວາມສົນໃຈກັນຢູ່ມາສົນທະນາ ມັນອາດຈະຊ່ວຍໃຫ້ບັນຍາກາດດີຂຶ້ນ ແລະ ເຮົາອາດຈະເປັນທີ່ຮັກໃນບ່ອນເຮັດວຽກນຳອີກ;

**10. ຢືມເງິນ:** ເລື່ອງນີ້ເປັນເລື່ອງທີ່ລະອຽດອ່ອນທີ່ສຸດ ແລະ ເຮັດໃຫ້ຄວາມສຳພັນຂອງຫຼາຍໆຄົນແຕກຫັກມາຫຼາຍແລ້ວ ເຖິງວ່າເຮົາຈະສະໜິດສະໜົມກັບເພື່ອນຮ່ວມງານພຽງໃດກໍຕາມ ຢ່າຢືມເງິນກັນເດັດຂາດ ຖ້າຍັງຢາກມີຄວາມສຳພັນທີ່ດີກັບເພື່ອນຮ່ວມງານທຸກຄົນ

ເມື່ອຮູ້ແບບນີ້ແລ້ວ ລອງສຳຫຼວດຕົວເອງເບິ່ງ ຢ່າປ່ອຍໃຫ້ເວລາຜ່ານໄປ ຈົນບໍ່ສາມາດແກ້ໄຂຫຍັງໄດ້ ເພາະເຮົາໃຊ້ຊີວິດໃນບ່ອນເຮັດວຽກບໍ່ຕໍ່າກວ່າ 8 ຊົ່ວໂມງຕໍ່ມື້ ແລະ ບໍ່ເປັນການດີ ທີ່ເຮົາຈະຕ້ອງເປັນບຸກຄົນທີ່ພະນັກງານໃນບ່ອນເຮັດວຽກບໍ່ຢາກເຂົ້າໃກ້ ຖ້າເຮົາປັບປ່ຽນພຶດຕິກຳເຫຼົ່ານີ້ໄດ້ ເຊື່ອວ່າຈາກທີ່ເຄີຍເຮັດວຽກໃນບັນຍາກາດທີ່ເຄັ່ງຕຶງ ອາດຈະກາຍມາເປັນການເຮັດວຽກທີ່ມີບັນຍາກາດດີ ແລະ ໄດ້ປະສິດທິພາບຍິ່ງຂຶ້ນ.

**ຄັດຈາກ: ວາລະສານຂວັນໃຈ**





## ສຸຂະສະບາຍຫາຍໂຣຄາ

# ຮູ້ທັນພະຍາດປາຍປະສາດອັກເສບ

**ໂດຍ: ສາວແວ່ນ**



ມີໃຜແດ່ທີ່ເປັນພະນັກງານຫ້ອງການທີ່ຕ້ອງເຮັດວຽກຕໍ່ໜ້າຄອມພິວເຕີຕະຫຼອດເວລາ? ແນ່ນອນວ່າ, ໃນແຕ່ລະມື້ຂອງການເຮັດວຽກ ແມ່ນໃຊ້ເວລາຢູ່ກັບຄອມພິວເຕີ ແລະ ຍັງຕ້ອງນັ່ງຢູ່ໃກ້ກັບໂຕະເຮັດວຽກ ເຖິງ 7-8 ຊົ່ວໂມງ ໂດຍສະເພາະຄົນກົດເມົ້າ ຫຼື ໃຊ້ໂທລະສັບມືຖືຕະຫຼອດ ຖ້າເຈົ້າຮູ້ສຶກເຈັບຄໍ່ມື, ນິ້ວມື, ປາຍມື, ປາຍຕີນ ຫຼືຮູ້ສຶກມຶນຊາຕາມຕີນຕາມມືບາງທີທ່ານອາດມີໂຣກປາຍປະສາດອັກເສບ ແຕ່ທ່ານຮູ້ບໍວ່າພະຍາດນີ້ແມ່ນຫຍັງ? ໃນຄໍລຳສຸກສະບາຍຫາຍໂຣຄາ ເຮົາໄດ້ຊອກຫາຄຳຕອບເພື່ອມານຳສະເໜີໃຫ້ທ່ານແລ້ວມາອ່ານນຳກັນເລີຍ.

ໂຣກປາຍປະສາດອັກເສບ ແມ່ນພາວະທີ່ເສັ້ນປະສາດທີ່ຮັບຄຳສັ່ງຈາກສະໝອງ ແລະ ໄຂກະດູກສັນຫຼັງ ໄປຫາອະໄວຍະວະຕ່າງໆຂອງຮ່າງກາຍ ໄດ້ຮັບຄວາມເສຍຫາຍ ຫຼື ເກີດມາຈາກພະຍາດບາງຊະນິດເຮັດໃຫ້ເສັ້ນປະສາດມີອາການບາດເຈັບ ແລະ ເຮັດໃຫ້ເກີດຄວາມຜິດປົກກະຕິຕໍ່ການຕອບສະໜອງ ຕໍ່ກັບການກະຕຸ້ນ.

ຮ່າງກາຍຂອງມະນຸດມີລະບົບປະສາດສ່ວນປາຍ ທີ່ຈະຮັບເອົາຄຳສັ່ງຈາກລະບົບປະສາດສ່ວນກາງ ແລ້ວ ສົ່ງຄຳສັ່ງໃຫ້ກ້າມເນື້ອ ເຮັດໃຫ້ຮ່າງກາຍເຄື່ອນໄຫວ ແລະ ຮູ້ສຶກໄດ້; ລະບົບປະສາດສ່ວນປາຍຈະເຮັດໜ້າທີ່ຄືກັບສາຍໄຟຟ້າ ໃນການນຳຄຳສັ່ງຜ່ານອະໄວຍະວະຕ່າງ ເຊິ່ງເສັ້ນປະສາດສ່ວນປາຍທີ່ອອກຈາກສະໝອງຈະມີທັງໝົດ 12 ເສັ້ນຄູ່ຊ້າຍ ແລະ ຂວາ ແຕ່ລະຄູ່ຄວບຄຸມໜ້າທີ່ການເຮັດວຽກໃນແຕ່ລະພາກສ່ວນຂອງຮ່າງກາຍທີ່ແຕກຕ່າງກັນອອກໄປ.

**ອາການເລີ່ມຂອງໂຣກປາຍປະສາດອັກເສບ**

- ມຶນຊາຢູ່ຕາມມື, ຕີນ ຫຼື ພາກສ່ວນຕ່າງໆຂອງຮ່າງກາຍ;
- ຮູ້ສຶກເຈັບແປັບໃນໜ້າ ຄືກັບຖືກໄຟຟ້າຊ໊ອດ;
- ຮ້ອນວູບວາບ ຫຼື ແສບຮ້ອນໃຕ້ຜິວໜັງ;
- ວິນຫົວ, ຍ່າງ ແລະ ຍືນບໍ່ທ່ຽງ;
- ຄວາມດັນເລືອດຕໍ່າ;
- ເຫື່ອອອກຫຼາຍກ່ວາປົກກະຕິ;
- ໃບໜ້າອ່ອນເພຍຂ້າງໃດຂ້າງໜຶ່ງ ຫຼື ມີອາການໜ້າບິດ.

ນອກຈາກພະນັກງານໃນຫ້ອງການທີ່ມັກເປັນພະຍາດນີ້ແລ້ວ ຄົນທົ່ວໄປກໍສາມາດເປັນພະຍາດນີ້ໄດ້ຄືກັນ ຕ້ອງເວົ້າກ່ອນວ່າ ຕົວຈິງແລ້ວສາເຫດຂອງໂຣກປາຍປະສາດອັກເສບນັ້ນ ສາມາດເກີດມາຈາກຫຼາຍສາເຫດ ຫຼື ເກີດຈາກພຶດຕິກຳຕ່າງໆເຊັ່ນ:

- ເຮັດວຽກໜັກຈົນບໍ່ມີເວລາພັກຜ່ອນ
- ດື່ມເຫລົ້າ ຫຼື ເຄື່ອງດື່ມທີ່ມີແອວກໍຮໍ ເປັນປະຈຳ
- ສູບຢາ
- ບໍ່ກິນອາຫານຄົບ 5 ໝູ່
- ມັກນັ່ງຂາຂຶ້ນຫ້າງ ຫຼື ມັກນັ່ງທ່າທີ່ສ້າງແຮງກົດທັບເສັ້ນປະສາດ
- ຮ່າງກາຍຂາດວິຕາມິນບາງຊະນິດເຊັ່ນ: B1, B6 ແລະ B12.
- ກິນຢາບາງຊະນິດທີ່ມີຜົນຂ້າງຄຽງຕໍ່ເສັ້ນປະສາດ.
- ເປັນພະຍາດເບົາຫວານ
- ເປັນມະເຮັງບາງຊະນິດເຊັ່ນ: ມະເຮັງກະດູກ, ມະເຮັງຕ່ອມລູກໝາກ.

## ອາດ ກະວີລາດ

## ສຽງຈາກດອກໄມ້ປ່າ

**# ບົວກາງບຶງ**

✲ ແຕ່ກ່ອນເນົາແນບເນື້ອ
ໝູ່ກະເລົາຄູນເຫຼືອງ
ເຜີ້ງແດງຂາວມຸ່ຍແຫຼ້
ແຂນຊໍ່ຊອນອາບເອ້

ແນວປ່າພະນາເຂົາ
ດອກເຮືອງໂຮມດ້າວ
ຍວງຍອຍຍ້ອຍຍ່ອນ
ຮາວຫ້ວຍຮ່ອມຜາ

✲ ເມື່ອໄດ້ມາຢູ່ຢັ້ງ
ສີແສງໃສໃນເມືອງ
ຫໍອາຄານຕຶກຕັ້ງ
ຍັງໄປ່ລືມດ່ານດ້າວ

ຕ່າງຖິ່ນດົນໄກ
ເຮື່ອເຮືອງໂຮງຮ້ານ
ໂຮງແຮມກິນດື່ມ
ຄາວຄັ້ງຜ່ານມາ ນັ້ນແລ້ວ!

✲ ຕອນນັ້ນ ຮຽມຢູ່ປ່າມ່ອນແມ້ງ
ຮັບກິ່ນອາຍດອມຝູງ
ເມື່ອມາເນົາເມືອງພີ້
ນັ່ງໂຖແກ້ວໜ່ວຍເຫຼື້ອມ

ແສນຊື່ນສົດໃສ
ເຫຼົ່າວົງສາເຊື້ອ
ມີດີແສນຢ່າງ
ເງິນຊ້ອນອັ່ງຮອງ ກໍດາຍແລ້ວ!

✲ ເມື່ອກ່ອນສຽງນົກຮ້ອງ
ງວ້ງອີຝູງເລໄລ
ໂດຍດັ່ງດົນຕີຕ້ອງ
ໃນອະລັ່ນດ່ານດ້າວ

ມວນໝູ່ປັກຂີ
ນີ້ນັນເນືອງກ້ອງ
ສຽງທອງຟົດສະນັ່ນ
ຄາວນັ້ນຊື່ນໃຈ ແທ້ແລ້ວ!

✲ ດຽວນີ້ຫາຍມິດຈ້ອຍ
ໄດ້ຢູ່ວັງວຽງຫຼວງ
ແສນລຳລານມີໜ້ອຍ
ຈັ່ງວ່າອຸກອັ່ງແຄ້ນ

ງອຍນັ່ງໃນຖັງ
ຂ່ວງຄາເມບ້ານ
ຄອຍຄະນຶງນ້ຳຕາຫຼັ່ງ
ແສນເສົ້າໂສກລະທົມ ແທ້ນໍ!

✲ ຍິນແຕ່ລົມພັດອູ້
ສົ່ງສຽງດັ່ງນັນເນືອງ
ມໍລະສຸມອາຍຮ້າຍ
ສັກກຸນາເຜັ່ນຜ້າຍ

ລົດແລ່ນທຽວທາງ
ເຄື່ອງຄວັນກວນກຸ້ມ
ກາຍດົມງ້ອງໃງ່
ສະຫຼາຍສິ້ນກິ່ນອາຍ

ຂໍສາຢ່າຍົກຍ້າຍ
ໃຫ້ຄົງຄຽງຄູ່ເຂົາ
ໄພພະນາຄືເກົ້າ
ເປັນທີ່ລືຊ່າຍ້ອງ

ດອກໄມ້ປ່າໜີດົງ
ຊົ່ວດິນດອນຟ້າ
ແດນລາວດວງເດັ່ນ
ຜອງເທົ້າໝື່ນອະສົງ ເຈົ້າເອີຍ!



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✲ ***ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX*** *ກຽມ* ***ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 26 ມິຖຸນາ*** *ແລ້ວຈະສືບຕໍ່ຍາວໄປຮອດວັນທີ 18 ກໍລະກົດ 2023. ທີ່* ***ຫ້ອງປະຊຸມສະພາແຫ່ງຊາດ*** *ບັນຍາກາດຄຶກຄືກຄື້ນ ສສຊ ກ່ວາມີຄ່າເຫັນ ຫຼາຍປະເດັນຊີບ່າມາ ວ່າກັບໃຫ້ມັນແຈ້ງ ຕິດຕາມຟັງຄະແຫຼງເວົ້າ ຕົວແທນເຮົາຊີໄຂກ່າວ ບັນຫາໃດເຄືອງຂຸ່ນຂ້ອງ ອາໂຫຼເວົ້າສົ່ງໄປ ທ່ານເອີຍ!*

***(ສາຍດ່ວນສະພາ 156 ໂມງລັດຖະການ)***

## 🤗 ຊວນຍິ້ມ 🤗

*# ແອ່ນຕຸ້ງ*

### ຫລັງດີຄືກັບ

ແຕ່ລະມື້ ແມ່ຈະບອກທ້າວກ່ານແຫຼ້ໄປຊື້ເຂົ້າຈີ່ທຸກໆເຊົ້າຢູ່ມາມື້ໜຶ່ງ, ທ້າວກ່ານແຫຼ້ກໍໄດ້ໄປຊື້ເຂົ້າຈີ່ຄືກັບທຸກມື້ ແຕ່ມື້ນີ້ຮູ້ສຶກວ່າເຂົ້າຈີ່ເບົາກວ່າທຸກມື້ ຈຶ່ງຖາມຄົນຂາຍວ່າ:

- **ທ້າວກ່ານແຫຼ້:** ມື້ນີ້ເຂົ້າຈີ່ຄືເບົາແທ້
- **ຄົນຂາຍ:** ໃສ່ໜ້ອຍຈັ່ງບໍ່ເມື່ອຍທື້

ທ້າວກ່ານແຫຼ້ຈຶ່ງເອົາເງິນໃຫ້ 3000 ກີບ

- **ຄົນຂາຍ:** ຄືໃຫ້ລຸງແຕ່ 3000 ກີບ ທຳມະດາ 5000 ກີບ ບໍ່ແມ່ນຫວາ?
- **ທ້າວກ່ານແຫຼ້:** ລຸງຈັ່ງຊິນັບແລ້ວໄວ ແລະ ບໍ່ເມື່ອຍ
- **ຄົນຂາຍ:** !!!!!!!!

**ແປຈາກ: story zone**




## ຄະຕິເຕືອນໃຈ

*# ດອກຫຍ້າ*

ຊາດທີ່ຖຸງຄາບ້າ ສະໝຸດຫຼວງບໍ່ມີຊາດສະເພົາແລ້ວ
ບຸບບ້າຍັງປ່ຽມລົ້ນ ຫຼາຍທ້ອຍຮ່ອມໂຮມ




# ປົ່ມຊ້ອນ - ເຊື່ອງຊ້ອນ

"ປົ່ມຊ້ອນ" ແລະ "ເຊື່ອງຊ້ອນ" ເປັນສອງຄຳທີ່ມີຄຳວ່າ "ຊ້ອນ" ຢູ່ທ້າຍຄືກັນ ແຕ່ມີຄວາມໝາຍ ແລະ ການໃຊ້ຕ່າງກັນດັ່ງນີ້:

"ປົ່ມຊ້ອນ" ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ "ປົ່ມ" ໝາຍເຖິງ "ຝັງຢູ່ໃນ, ລີ້ຢູ່ໃນ" ແລະ "ຊ້ອນ" (ພ້ຽນສຽງມາຈາກຊ່ອນ) ໝາຍເຖິງ "ເຊື່ອງ, ລີ້, ເຮັດບໍ່ໃຫ້ເຫັນ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ "ປົ່ມຊ້ອນ" ກໍໝາຍເຖິງ "ທີ່ຝັງຢູ່, ເຊື່ອງຢູ່ທາງໃນ" ຄຳນີ້ມັກຂະຫຍາຍໃຫ້ "ຄວາມສາມາດ" ແລະ "ທ່າແຮງ" ເຊັ່ນ:

- ທາງຫົວໜ້າວົງດົນຕີໄດ້ເລືອກເອົາດວງສີ ເພາະລາວເປັນຄົນມີຄວາມສາມາດປົ່ມຊ້ອນທາງດ້ານການດົນຕີ.
- ສື່ຕ່າງໆໄດ້ໂຄສະນາຄວາມສາມາດປົ່ມຊ້ອນທາງດ້ານເສດຖະກິດ-ສັງຄົມ, ການລົງທຶນດ້ານການຄ້າ ແລະການທ່ອງທ່ຽວຂອງບັນດາທ້ອງຖິ່ນຢູ່ເສັ້ນຊາຍແດນ ເຊກອງ-ກວາງນາມ.
- ເສີມຂະຫຍາຍທຸກຄວາມສາມາດ ແລະທ່າແຮງປົ່ມຊ້ອນ ເພື່ອພັດທະນາແຂວງຂອງຕົນໃຫ້ຈະເລີນກ້າວໜ້າ.

"ເຊື່ອງຊ້ອນ" ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ "ເຊື່ອງ" ໝາຍເຖິງ "ເອົາໄວ້ບ່ອນບໍ່ໃຫ້ໃຜເຫັນ" ແລະ "ຊ້ອນ" (ພ້ຽນສຽງມາຈາກຊ່ອນ) ໝາຍເຖິງ "ເຊື່ອງ, ລີ້, ເຮັດບໍ່ໃຫ້ເຫັນ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ "ເຊື່ອງຊ້ອນ" ກໍໝາຍເຖິງ "ເອົາໄປໄວ້ໃນບ່ອນທີ່ບໍ່ມີຄົນເຫັນ" ເຊັ່ນ:

- ລາວເຊື່ອງຊ້ອນຂອງມີຄ່າໄວ້ຢູ່ບ່ອນລີ້ລັບ ເພື່ອບໍ່ໃຫ້ຜູ້ໃດມາຊອກເຫັນ.
- ບາງຄົນເຖິງຈະສະແດງທ່າທີມ່ວນຊື່ນອອກທາງພາຍນອກ ແຕ່ໃນຈິດໃຈພັດເຊື່ອງຊ້ອນຄວາມທຸກໃຈໄວ້ກໍມີ.
- ພວກພໍ່ຄ້າຢາໄດ້ເຊື່ອງຊ້ອນຢາເສບຕິດໄວ້ຢູ່ໃນລົດ ແຕ່ກໍບໍ່ຫຼຸດລອດຈາກສາຍຕາຂອງເຈົ້າໜ້າທີ່ຕຳຫຼວດໄປໄດ້.




ລີ້ນຂອງມະນຸດ ສຸດທີ່ແຂງ ເປັນອາວຸດທີ່ໄຮ້ຄົມ ແລະ ອັນຕະລາຍທີ່ສຸດ.




# ອະດີດນາຍົກອັງກິດ ລາອອກຈາກການເປັນສະມາຊິກສະພາຜູ້ແທນລາສະດອນ

ອີງຕາມສຳນັກຂ່າວ AFP ລາຍງານໃຫ້ຮູ້ວ່າ: ທ່ານ ບໍຣິສ ຈອນສັນ ອະດີດນາຍົກລັດຖະມົນຕີອັງກິດ ໄດ້ປະກາດລາອອກຈາກການເປັນສະມາຊິກສະພາຜູ້ແທນລາສະດອນ ເມື່ອວັນທີ 9 ມິຖຸນາຜ່ານມາ, ເນື່ອງຈາກຖືກກົດດັນຢ່າງໜັກຈາກພັກການເມືອງ ຈາກກໍລະນີທີ່ສວຍໂອກາດຈັດງານລ້ຽງຢູ່ທີ່ທຳນຽບນາຍົກລັດຖະມົນຕີ ໃນໄລຍະປະຕິບັດລະບຽບການເພື່ອຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19.



ທ່ານ ບໍຣິສ ຈອນສັນ ແມ່ນກຳລັງຖືກສືບສວນສອບສວນໂດຍຄະນະກຳມະການລັດຖະສະພາວ່າ ທ່ານໄດ້ສໍ້ລາດບັງຫຼວງຊ້ຳແລ້ວຊ້ຳອີກ ເຊິ່ງຈາກຫຼັກຖານໃນຕົ້ນປີນີ້ ທ່ານ ບໍຣິສ ຈອນສັນ ຢືນຢັນດ້ວຍຄວາມບໍ່ພໍໃຈວ່າຕົນບໍ່ໄດ້ເຮັດ.

ໃນຂະນະທີ່ຄະນະກຳມະການດັ່ງກ່າວ ກະກຽມປະກາດຜົນການສືບສວນຕໍ່ປະຊາຊົນ, ທ່ານ ບອສຣິດ ຈອນສັນ ໄດ້ປະກາດກ່ອນໜ້ານັ້ນວ່າ "ຄົນເຫຼົ່ານັ້ນແມ່ນມີແຮງຈູງໃຈທາງການເມືອງ, ໂດຍຈັດຕັ້ງຂັບໄລ່ຂ້າພະເຈົ້າອອກຈາກລັດຖະສະພາ".

ຄະນະກຳມະການກວດສອບດັ່ງກ່າວ, ມີອຳນາດໃນການລົງໂທດຕໍ່ການເວົ້າບໍ່ມີມູນຄວາມຈິງຕໍ່ລັດຖະສະພາ ເຊິ່ງອາດຈະຮ້າຍແຮງເຖິງຈຸດຂອງການຢຸດການດຳເນີນວຽກງານ ແລະ ຕາມຂັ້ນຕອນປົກກະຕິ ຫຼື ພັກວຽກຫຼາຍກວ່າ 10 ມື້ ສາມາດນຳໄປສູ່ການເລືອກຕັ້ງໃໝ່. ໃນເຂດເລືອກຕັ້ງຂອງສະມາຊິກສະພານັ້ນ.

ແນວໃດກໍຕາມ, ທ່ານ ບໍຣິສ ຈອນສັນ ໄດ້ເລືອກທີ່ຈະລາອອກເປັນສະມາຊິກລັດຖະສະພາ. ກ່ອນຈະໄດ້ຮັບການປະກາດຜົນການສືບສວນ.

# ຣັດເຊຍ-ສປ ຈີນ ລົງນາມຂໍ້ຕົກລົງຄວາມຮ່ວມມືດ້ານພິພິທະພັນ

ອີງຕາມການລາຍງານຂ່າວໃນວັນທີ 8 ມິຖຸນາ 2023 ໃຫ້ຮູ້ວ່າ: ທ່ານ ອາເລັກເຊຍ ເລວີຄິນ ຜູ້ອຳນວຍການພິພິທະພັນ ປະຫວັດສາດຂອງຣັດເຊຍ ແລະ ທ່ານ ໂຈວ ສະວິນຫົວ ປະທານພິພິທະພັນປະຫວັດສາດຊຽງໄຮ້ ໄດ້ເຂົ້າຮ່ວມໃນພິທີລົງນາມບົດບັນທຶກຂໍ້ຕົກລົງຄວາມຮ່ວມມືທີ່ເປັນມິດ ຢູ່ນະຄອນຫຼວງ ມົດສະກູ ປະເທດຣັດເຊຍ.

ສອງຝ່າຍ ໄດ້ເອກະພາບຕົກລົງດຳເນີນການແລກປ່ຽນ



ແລະ ຄວາມຮ່ວມມືດ້ານການຝຶກອົບຮົມບຸກຄະລາກອນ, ການຈັດນິທັດສະການ, ການແບ່ງປັນຊັບພະຍາກອນດິຈິຕອນ ແລະ ການອະນຸຮັກມໍລະດົກ ທາງວັດທະນະທຳ ແລະ ອື່ນໆ.

# ອາເມລິກາ ກຽມເຂົ້າເປັນສະມາຊິກອົງການ UNESCO ຄືນໃໝ່

ເມື່ອວັນທີ 12 ມິຖຸນາ ນີ້ ມີການລາຍງານຂ່າວໃຫ້ຮູ້ວ່າ: ລັດຖະບານອາເມຣິກາພາຍໃຕ້ການນຳພາຂອງທ່ານ ໂຈ ໄບເດນ ປະທານາທິບໍດີອາເມຣິກາ ເປີດເຜີຍວ່າ: ປັດຈຸບັນ ທາງການອາເມຣິກາກຳລັງກຽມສະໝັກກັບເຂົ້າເປັນສະມາຊິກອົງການ UNESCO ອີກ ໃນເດືອນກໍລະກົດ 2023 ຫຼັງຈາກເຄີຍຖອນຕົວໄປໃນສະໄໝອະດີດປະທານາທິບໍດີ ໂດນັລ ທຣຳ ປະມານ 5 ປີກ່ອນ.



ທ່ານ ຣິຊາດ ເວີມາ ຮອງລັດຖະມົນຕີກະຊວງການຕ່າງປະເທດເປີດເຜີຍເຖິງແຜນທີ່ອາເມຣິກາຈະສະໝັກກັບເຂົ້າໄປເປັນສະມາຊິກ UNESCO ອີກ ພ້ອມທັງເປີດເຜີຍວ່າ: ການດຳເນີນງານໃດໆຈະຕ້ອງໄດ້ຮັບຄວາມເຫັນພ້ອມຈາກສະມາຊິກປັດຈຸບັນຂອງ UNESCO ແລະ ທາງການອາເມຣິກາ.

ໂດຍອາເມຣິກາມີປະຫວັດເຄີຍຖອນຕົວອອກຈາກການເປັນສະມາຊິກ UNESCO ມາແລ້ວ 2 ຄັ້ງ ໃນສະໄໝອະດີດປະທານາທິບໍດີ ໂດນັລ ເຣແກນ ປີ 1984 ກ່ອນຈະສະໝັກກັບເຂົ້າໄປເປັນສະມາຊິກອີກໃນສະໄໝອະດີດປະທານາທິບໍດີ ຈອດ ດັບເບິລຢູ ບຸສ ໃນປີ 2003 ແລະ ຕັດສິນໃຈຖອນຕົວອີກໃນສະໄໝອະດີດປະທານາທິບໍດີ ໂດນັລ ທຣຳ ໃນປີ 2017.

ປັດຈຸບັນ UNESCO ມີປະເທດສະມາຊິກ 193 ປະເທດ ແລະ ສະມາຊິກສົມທົບອີກ 12 ປະເທດ ໂດຍມີທ່ານ ອໍເດຣ ອາຊູເລ ອະດີດລັດຖະມົນຕີກະຊວງວັດທະນະທຳຂອງຝຣັ່ງ ດຳລົງຕຳແໜ່ງຜູ້ອຳນວຍການໃຫຍ່ອົງການ UNESCO ຄົນປັດຈຸບັນ.




#ກາລິບເບ

## ບິນກັບເຫາະ

ເຮົາມາຮູ້ຈັກກັບຄຳສັບທີ່ວ່າ "ບິນ" ໄປກ່ອນ. ໃນຄຳວ່າ "ບິນ" ຈະໝາຍເຖິງການພັບປີກ ເຊັ່ນ: ນົກ, ໄກ່ ແລະ ອື່ນໆ ທີ່ສາມາດພືປີກອອກແລ້ວພັບປີກໄດ້

ໃນຄຳສັບທີ່ວ່າ "ເຫາະ" ຈະໝາຍເຖິງສິ່ງທີ່ມີ ຫຼືບໍ່ມີປີກ ແຕ່ບໍ່ສາມາດພັບປີກໄດ້ ເຊັ່ນ: ຍົນ, ນົກເຫາະ ຫຼືການເດີນໄປດ້ວຍຍານຕ່າງໆ ຄົນລາວຄາວກ່ອນ ເອີ້ນຍົນວ່າ ເຮືອເຫາະ ຈຶ່ງເປັນຄຳທີ່ຖືກຕ້ອງ ເພາະເຮືອເຫາະບໍ່ໄດ້ພັບປີກ ແຕ່ປັດຈຸບັນຊໍ້າພັດເອີ້ນວ່າ "ຍົນ". ໃນຄຳວ່າ ຍົນ ຫຼື ຍານ ໝາຍເຖິງບໍ່ໄດ້ພັບປີກ ເຊັ່ນ: ຜູ້ທີ່ບັນລຸທຳ ເພິ່ນຈະໄດ້ອະພິນຍາທັງ 6 ຄື: ໄປຫາຍານໄດ້ມີຫູທິບ, ຕາທິບ ຈື່ຊາດກ່ອນໄດ້ ... ຜູ້ທີ່ເພິ່ນໄປຫາຍານໄດ້ ເພິ່ນກໍບໍ່ມີປີກ ແຕ່ເພິ່ນເຫາະໄປໄດ້ເໝືອນເຮືອເຫາະນັ້ນເອງ ນອກຈາກນີ້ ກໍຍັງມີບັ້ງໄຟ, ຈະຫຼວດ, ລູກປືນ ແລະ ອື່ນໆ ກໍຈັດເຂົ້າຢູ່ໃນກຸ່ມທີ່ເຫາະເຫີນເດີນອາກາດໄດ້. ຈຳພວກທີ່ມີປີກ ແລະ ບໍ່ມີປີກ ກໍເອີ້ນວ່າເຫາະ ເພາະພັບປີກບໍ່ໄດ້.

ສະນັ້ນ ຄຳສັບຄົນບູຮານລາວໃຊ້ແຕ່ກ່ອນວ່າ "ເຮືອເຫາະ" ຈຶ່ງເປັນຄຳທີ່ຖືກຕ້ອງ.

# ກຳຈັດສິ່ງເຫຼືອປະເພດຢາງ - ເພີ່ມສີຂຽວທົ່ວຊຸມຊົນ

❖ ວິເສດ ສະແຫວງສຶກສາ

ວັນທີ 5 ຂອງເດືອນມິຖຸນາທຸກໆປີ ແມ່ນວັນສິ່ງແວດລ້ອມສາກົນ, ດັ່ງນັ້ນຈຶ່ງຂໍສັງລວມເອົາຂ່າວຄາວກ່ຽວກັບມາດຕະການຂອງບາງປະເທດທີ່ໃຊ້ເປັນເຄື່ອງມືເພື່ອສົ່ງເສີມສິ່ງແວດລ້ອມໃຫ້ສະອາດສົດໃສໄຮ້ມົນລະພິດ, ຮັກສາໄດ້ຄວາມຂຽວຂອງບ້ານເມືອງ, ປະເທດ ແລະ ໃນໂລກໂດຍລວມ. ເລີ່ມຈາກ **ປະເທດຝຣັ່ງ** ບ່ອນທີ່ມີຂ່າວອອກມາໃນເດືອນກໍລະກົດ 2021 ວ່າ ຜູ້ແທນລາສະດອນ (ສະພາຕ່ຳ) ໄດ້ລົງມະຕິຮັບຮອງເອົາກົດໝາຍວ່າດ້ວຍຄວາມກຽມພ້ອມເພື່ອແກ້ໄຂການປ່ຽນແປງຂອງສະພາບອາກາດທີ່ເກີດມາຈາກການປ່ອຍພິດເຮືອນແກ້ວ ທັງນີ້ກໍເພາະວ່າ ຝຣັ່ງໄດ້ວາງເປົ້າໝາຍຫຼຸດຜ່ອນການປ່ອຍທາດພິດດັ່ງກ່າວພາຍໃນປີ 2030 ໃຫ້ໄດ້ຕ່ຳກວ່າ 40% ທຽບກັບລະດັບການປ່ອຍພິດຊະນິດນີ້ ໃນປີ 1990. ກົດໝາຍໄດ້ກຳນົດມາດຕະການປະຢັດພະລັງງານ, ຫຼຸດຜ່ອນການປ່ອຍກາກບອນດີໄອຊິດ ໃນຂະແໜງຄົມມະນາຄົມ, ຂະແໜງສະຖາປັດຕະຍະກຳ ແລະ ຂະແໜງເຄື່ອງບໍລິໂພກໃຫ້ໄດ້ພາຍໃນ 2025. ໃນບັນດາຕົວເມືອງຂອງຝຣັ່ງ ທີ່ມີປະຊາກອນແຕ່ 150 ພັນຄົນຂຶ້ນໄປ ຕ້ອງຈັດໃຫ້ມີເຂດປ່ອຍກາກບອນດີໄອຊິດ ໃນລະດັບຕ່ຳ, ຈຳກັດຄວາມໄວໃນການແລ່ນລົດ ແລະ ຍົກເລີກ ຫຼື ຈຳກັດຖ້ຽວແລ່ນລົດໄຟຄວາມໄວສູງລົງ. **ຢູ່ປະເທດອັງກິດ** ເມື່ອປະມານ 4-5 ປີ ຜ່ານມາ ກໍມີຂ່າວວ່າ ບັນດາຮ້ານສັບພະສິນຄ້າຕ່າງໆ ໄດ້ຢຸດເຊົາການບໍລິການຖົງຢາງໃສ່ເຄື່ອງທີ່ໃຊ້ພຽງຄັ້ງດຽວໃຫ້ບັນດາລູກຄ້າ ທີ່ຊື້ສິນຄ້າຢູ່ພາຍໃນຮ້ານ. ແຕ່ກ່ອນ ຖົງຢາງໃສ່ເຄື່ອງຊະນິດນີ້ແມ່ນໃຫ້ລ້າ ແຕ່ຫຼັງໆມານີ້ ການແຈກໃຫ້ລ້າໆໄດ້ສິ້ນສຸດລົງແລ້ວ ຄືລູກຄ້າຕ້ອງໄດ້ຈ່າຍເອົາເອງ. ດ້ວຍວິທີການດັ່ງກ່າວ, ບັນດາລູກຄ້າກໍເລີຍພາກັນຫັນໄປໃຊ້ຖົງໃສ່ເຄື່ອງຕົນເອງທີ່ເຮັດດ້ວຍແພ, ເຈ້ຍ ຫຼື ຢາງຊະນິດໜາໃຊ້ໄດ້ຫຼາຍເທື່ອ. ນີ້ເປັນວິທີການທີ່ຊ່ວຍຫຼຸດຂີ້ເຫຍື້ອຖົງຢາງຊະນິດໃຊ້ເທື່ອດຽວແລ້ວຖິ້ມໄດ້ຢ່າງຫຼວງຫຼາຍ. ຜົນສຳເລັດໃນການຈຳກັດການໃຊ້ຖົງຢາງ ໄດ້ນຳໄປສູ່ມາດຕະການທີ່ເດັດຂາດຂຶ້ນຕື່ມ ຄືທາງການອັງກິດ ໄດ້ປະກາດໃຊ້ກົດໝາຍໃນທ້າຍປີ 2020 ທີ່ກຳນົດຫ້າມໃຊ້ທໍ່ດູດ, ບ່ວງ ແລະ ກ້ານປຸ້ມຝ້າຍທີ່ເຮັດດ້ວຍຢາງ ເພື່ອໃຊ້ຄວັດຫູ. ທາງການອັງກິດໄດ້ໃຫ້ຮູ້ວ່າ ແຕ່ລະປີຄົນອັງກິດໄດ້ສ້າງກອງຂີ້ເຫຍື້ອກອງໃຫຍ່ເຈັ້ນເທີ້ນ ຈາກເສດທໍ່ດູດຈຳ



ນວນ 4,7 ພັນລ້ານອັນ, ບ່ວງຢາງເພື່ອຄົນເຄື່ອງດື່ມ 316 ລ້ານອັນ ແລະ ກ້ານປຸ້ມຝ້າຍຄວັດຫູຈຳນວນ 1,8 ພັນລ້ານອັນ. ນີ້ຖືວ່າເປັນກົດໝາຍສະເພາະເຈາະຈົງ ກຳນົດຫ້າມ 3 ປະເພດຜະລິດຕະພັນທີ່ເຮັດດ້ວຍຢາງ.

**ຢູ່ເຢຍລະມັນ** ກໍມີຂ່າວກ່ຽວກັບການປະກາດໃຊ້ກົດໝາຍຫ້າມຈຳໜ່າຍຜະລິດຕະພັນທີ່ເຮັດດ້ວຍຢາງຊະນິດໃຊ້ພຽງຄັ້ງດຽວ, ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 3 ກໍລະກົດ 2021ເປັນຕົ້ນມາ. ວັດຖຸທີ່ກົດໝາຍກຳນົດຫ້າມລວມມີເຄື່ອງທີ່ໃຊ້ບັນຈຸອາຫານ, ເຄື່ອງມືໃຊ້ຕັກ-ຄີບອາຫານ, ທໍ່ດູດນ້ຳ, ກ່ອງໂຟມ ແລະ ຈອກ. ຢູ່ເຢຍລະມັນ ຂີ້ເຫຍື້ອຢາງປະເພດນີ້ ມັກຈະໄປອັ່ງຢູ່ນ່ານນ້ຳທະເລ. ທາງການຂອງປະເທດນີ້ເຊື່ອວ່າກົດໝາຍຈະຊ່ວຍຫຼຸດຈຳນວນຂີ້ເຫຍື້ອຢາງລົງໄດ້ສູງເຖິງ 70%.

ສຸດທ້າຍຂໍກ້ຽວມາໃສ່ຂ່າວຈາກ**ຫວຽດນາມ** ທີ່ຕ່າງໄປຈາກຂ່າວທີ່ເລົ່າມາຂ້າງເທິງນີ້. ເປັນຂ່າວກ່ຽວກັບຄວາມພະຍາຍາມຂອງທາງການຫວຽດນາມ ເພື່ອເພີ່ມສີຂຽວໃຫ້ປົກຄຸມໄປທົ່ວປະເທດ. ສີຂຽວໃນທີ່ນີ້ ໝາຍເຖິງນະໂຍບາຍຊຸກຍູ້ຂະບວນການປູກຕົ້ນໄມ້ໃນທົ່ວຊຸມຊົນໃຫ້ເປັນສີຂຽວ ໂດຍເນັ້ນຕົ້ນໄມ້ພັນທ້ອງຖິ່ນ, ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ອຸດສາຫະກຳ ລວມທັງປະເພດປະດັບ. ການຫັນທົ່ວຊຸມຊົນເປັນສີຂຽວດ້ວຍຕົ້ນໄມ້ນັ້ນ ຖືກກຳນົດໂດຍຄຳສັ່ງເລກທີ 45 ລົງວັນທີ 31 ທັນວາ 2020 ຂອງທ່ານ ນາຍົກຫວຽດນາມ, ຂ່າວໄດ້ເລົ່າຄືນວ່າ ຂະບວນການປູກຕົ້ນໄມ້ນີ້ໄດ້ສືບສານມາຈາກແນວຄິດຂອງປະທານ ໂຮ່ຈີ່ມິ່ງ ທີ່ນຳພາຈັດໃຫ້ມີຂະບວນບຸນເຕດປູກຕົ້ນໄມ້ຂຶ້ນໃນວັນທີ 28 ພະຈິກ 1959. ທາງການຫວຽດນາມໄດ້ຕັ້ງເປົ້າໝາຍປູກຕົ້ນໄມ້ໃຫ້ໄດ້ 1 ຕື້ຕົ້ນພາຍໃນ 5 ປີ ຄືແຕ່ປີ 2021-2025 ປູກໂດຍມີການປົກປັກຮັກສາ, ບໍ່ແມ່ນເອົາແຕ່ພິທີການ ແລະ ຜົນງານມາບັງໜ້າ!.




## ພໍ່ຂ້ານ້ອຍປາກ

*# ບ່າວກະບື*

ຫຼັງຈາກໄດ້ພັກຜ່ອນປິດເວລາຍືດຍາວ... ຕຸກຕິກຍັງບໍ່ທັນຢາກໄປໂຮງຮຽນເທື່ອ, ເຂົາຍັງຢາກພັກຕໍ່ຢູ່ເຮືອນອີກຫຼາຍໆວັນ, ດັ່ງນັ້ນ ເຂົາຈຶ່ງໂທໄປຫານາຍຄູ ໂດຍພະຍາຍາມເວົ້າໃຫ້ຄືສຽງພໍ່ຂອງເຂົາ.

"ທ້າວຕຸກຕິກບໍ່ສະບາຍ, ນັບນອນແຕ່ຢູ່ຕຽງ. ມັນຍັງສິໄປໂຮງຮຽນບໍ່ໄດ້ອີກຫຼາຍວັນ". ພໍໄດ້ຍິນແນວນັ້ນ, ຝ່າຍນາຍຄູເວົ້າຂຶ້ນວ່າ:

"ເອີ່... ຂ້ອຍເສຍໃຈທີ່ຊາບຂ່າວນີ້. ແມ່ນໃຜປາກນັ້ນ?".

"ພໍ່ຂ້ານ້ອຍເອງປາກ... ທ່ານຄູ" ຕຸກຕິກຕອບ .

## MY FATHER IS SPEAKING

*# BAOKBU*

**TukTik** did not want to go back to school after the long holidays. He wanted to stay several more days at home. So he telephoned his teacher. He tried to speak like his father.

" TukTik is ill in bed. He can not go to school for several days." Upon hearing that, the teacher said :

"Well, I am sorry to hear that Who is speaking ?

"My father, sir ", answered TukTik

ຕາມພາສາ ກາຕູນ




ການສຶກສາ ຄືເສັ້ນທາງສູ່ຄວາມສີວິໄລ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ :
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

ຄະນະບັນນາທິການ :
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ :
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ :
ນາງ ນິດຕາ ຄຸນປາກດີ